ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ

ເລກທີ 293/ທຫລ

ນະຄອນຫຼວງວຽງຈັນ, ວັນທີ 01 APR 2019

# ຂໍ້ຕົກລົງ
# ວ່າດ້ວຍລະບົບການຊຳລະທຸລະກຳຍ່ອຍ

- ອີງຕາມ ກົດໝາຍວ່າດ້ວຍທະນາຄານແຫ່ງ ສປປ ລາວ (ສະບັບປັບປຸງ) ສະບັບເລກທີ 47/ສພຊ, ລົງວັນທີ 16 ມິຖຸນາ 2018;
- ອີງຕາມ ກົດໝາຍວ່າດ້ວຍລະບົບການຊຳລະ ສະບັບເລກທີ 32/ສພຊ, ລົງວັນທີ 07 ພະຈິກ 2017;
- ອີງຕາມ ການຄົ້ນຄວ້າ ແລະ ການສະເໜີຂອງກົມຄອງລະບົບຊຳລະສະສາງ.

**ຜູ້ວ່າການທະນາຄານແຫ່ງ ສປປ ລາວ ຕົກລົງ:**

## ພາກທີ I
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການກ່ຽວກັບການຄຸ້ມຄອງ ລະບົບການຊຳລະທຸລະກຳຍ່ອຍ ຢູ່ ສປປ ລາວ ເພື່ອສົ່ງເສີມໃຫ້ລະບົບການຊຳລະທຸລະກຳຍ່ອຍມີປະສິດທິພາບ, ໝັ້ນຄົງ, ປອດໄພ ແລະ ມີການບໍລິຫານຈັດການຄວາມສ່ຽງທີ່ເໝາະສົມ ແນໃສ່ຮັບປະກັນລະບົບການຊຳລະທຸລະກຳຍ່ອຍ ໃຫ້ບໍລິການໄດ້ຢ່າງຕໍ່ເນື່ອງ, ສະດວກ, ວ່ອງໄວ ແລະ ມີປະສິດທິພາບ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ຂອງຊາດ.

### ມາດຕາ 2 ລະບົບການຊຳລະທຸລະກຳຍ່ອຍ

ລະບົບການຊຳລະທຸລະກຳຍ່ອຍ ແມ່ນລະບົບທີ່ເປັນສູນກາງເຊື່ອມຕໍ່ ລະຫວ່າງສະມາຊິກຂອງລະບົບເພື່ອຮອງຮັບການໂອນເງິນ, ການໄລ່ລຽງ ແລະ ການຫັກບັນຊີ ທີ່ມີມູນຄ່າການຊຳລະຕ່ຳ ເປັນຕົ້ນ ການຊຳລະດ້ວຍ ແຊັກ, ໂອນເງິນ, ເງິນເອເລັກໂຕຣນິກ ແລະ ບັດ.

# ສາລະບານ


ພາກທີ I ບົດບັນຍັດທົ່ວໄປ ........ 1
ມາດຕາ 1 ຈຸດປະສົງ ........ 1
ມາດຕາ 2 ລະບົບການຊໍາລະທຸລະກໍາຍ່ອຍ ........ 1
ມາດຕາ 3 ອະທິບາຍສັບ ........ 2
ມາດຕາ 4 ຂອບເຂດການນໍາໃຊ້ ........ 2
ພາກທີ II ລະບົບການຊໍາລະທຸລະກໍາຍ່ອຍ ........ 2
ມາດຕາ 5 ປະເພດລະບົບການຊໍາລະທຸລະກໍາຍ່ອຍ ........ 2
ມາດຕາ 6 ລະບົບການໂອນເງິນທຸລະກໍາຍ່ອຍລະຫວ່າງສະມາຊິກ ........ 3
ມາດຕາ 7 ລະບົບເຄືອຂ່າຍບັດ ........ 3
ມາດຕາ 8 ລະບົບການຫັກບັນຊີ ........ 3
ມາດຕາ 9 ຜູ້ເຂົ້າຮ່ວມໃນລະບົບການຊໍາລະທຸລະກໍາຍ່ອຍ ........ 3
ພາກທີ III ຜູ້ຄວບຄຸມລະບົບຍ່ອຍ ........ 3
ໝວດທີ 1 ການຂໍອະນຸຍາດເປັນຜູ້ຄວບຄຸມລະບົບຍ່ອຍ ........ 3
ມາດຕາ 10 ການຂໍອະນຸຍາດເປັນຜູ້ຄວບຄຸມລະບົບຍ່ອຍ ........ 3
ມາດຕາ 11 ເງື່ອນໄຂການເປັນຜູ້ຄວບຄຸມລະບົບຍ່ອຍ ........ 6
ມາດຕາ 12 ທຶນຈົດທະບຽນ ........ 7
ມາດຕາ 13 ການພິຈາລະນາ ........ 7
ມາດຕາ 14 ການນໍາໃຊ້ ແລະ ອາຍຸການນໍາໃຊ້ ໃບອະນຸຍາດ ........ 7
ມາດຕາ 15 ການເຜີຍແຜ່ຕໍ່ສື່ມວນຊົນ ........ 8
ມາດຕາ 16 ຄ່າທໍານຽມ, ຄ່າບໍລິການ ແລະ ຄ່າຄຸ້ມຄອງປະຈໍາປີ ........ 8
ໝວດທີ 2 ການດໍາເນີນງານຂອງຜູ້ຄວບຄຸມລະບົບຍ່ອຍ ........ 8
ມາດຕາ 17 ການດໍາເນີນງານຂອງຜູ້ຄວບຄຸມລະບົບຍ່ອຍ ........ 8
ມາດຕາ 18 ຄວາມໝັ້ນຄົງທາງການເງິນ ........ 8
ມາດຕາ 19 ການຄຸ້ມຄອງບໍລິຫານ ........ 9
ມາດຕາ 20 ການດໍາເນີນທຸລະກິດຕາມທີ່ໄດ້ຮັບອະນຸຍາດ ........ 9
ມາດຕາ 21 ໜ້າທີ່ ແລະ ຄວາມຮັບຜິດຊອບຂອງຜູ້ບໍລິຫານ ........ 9
ມາດຕາ 22 ການຄວບຄຸມພາຍໃນ ........ 10
ມາດຕາ 23 ການປ່ຽນແປງອໍານາດໃນການຄວບຄຸມກິດຈະການ ........ 11
ມາດຕາ 24 ການບໍລິຫານຄວາມສ່ຽງ ແລະ ຄວາມປອດໄພ ........ 11
ມາດຕາ 25 ການກໍານົດນະໂຍບາຍ ແລະ ມາດຕະການບໍລິຫານຄວາມສ່ຽງ ........ 12
ມາດຕາ 26 ການໃຊ້ບໍລິການຈາກຜູ້ໃຫ້ບໍລິການພາຍນອກ (Outsourcing) ........ 12
ມາດຕາ 27 ການປ່ຽນແປງການດໍາເນີນທຸລະກິດ ........ 13

ມາດຕາ 28 ການຢຸດໃຫ້ບໍລິການຊົ່ວຄາວ ຫຼື ເກີດບັນຫາ ຫຼື ຄວາມບົກຜ່ອງໃນການໃຫ້ບໍລິການລະບົບ ....... 14
ມາດຕາ 29 ການຮັກສາຄວາມປອດໄພດ້ານລະບົບເຕັກໂນໂລຊີຂໍ້ມູນຂ່າວສານ ....... 14
ມາດຕາ 30 ການປົກປ້ອງສະມາຊິກ ....... 14
ມາດຕາ 31 ການກຳນົດລະບຽບການໃຫ້ບໍລິການ ....... 15
ມາດຕາ 32 ການເກັບຮັກສາຂໍ້ມູນສ່ວນຕົວຂອງສະມາຊິກ ....... 15
ມາດຕາ 33 ການເປີດເຜີຍຄ່າທຳນຽມ ....... 15
ມາດຕາ 34 ການແກ້ໄຂຂໍ້ຂັດແຍ່ງ. ....... 16
ມາດຕາ 35 ການສົ່ງເສີມໃຫ້ມີການແຂ່ງຂັນ ....... 16
ມາດຕາ 36 ການລາຍງານ ....... 16
ໝວດທີ 3 ການໂຈະ ແລະ ການຖອນໃບອະນຸຍາດ ....... 17
ມາດຕາ 37 ການໂຈະການດຳເນີນງານຂອງຜູ້ຄວບຄຸມລະບົບຍ່ອຍ ....... 17
ມາດຕາ 38 ການຖອນໃບອະນຸຍາດເປັນຜູ້ຄວບຄຸມລະບົບຍ່ອຍ ....... 17
ມາດຕາ 39 ການຊຳລະສະສາງ ....... 18
ພາກທີ IV ສະມາຊິກຂອງລະບົບການຊຳລະທຸລະກຳຍ່ອຍ ....... 18
ມາດຕາ 40 ສະມາຊິກ ....... 18
ມາດຕາ 41 ການເຄື່ອນໄຫວຂອງສະມາຊິກ ....... 18
ພາກທີ V ການຄຸ້ມຄອງ ແລະ ການກວດກາ ....... 18
ໝວດທີ 1 ການຄຸ້ມຄອງວຽກງານລະບົບການຊຳລະທຸລະກຳຍ່ອຍ ....... 18
ມາດຕາ 42 ອົງການຄຸ້ມຄອງ ....... 18
ມາດຕາ 43 ສິດ ແລະ ໜ້າທີ່ຂອງກົມຄຸ້ມຄອງລະບົບຊຳລະສະສາງ ....... 18
ໝວດທີ 2 ການກວດກາ ....... 19
ມາດຕາ 44 ອົງການກວດກາ ....... 19
ມາດຕາ 45 ການກວດກາທາງດ້ານວິຊາການ ....... 19
ມາດຕາ 46 ຮູບແບບການກວດກາ ....... 19
ມາດຕາ 47 ການເກັບຮັກສາຂໍ້ມູນ ....... 20
ພາກທີ VI ນະໂຍບາຍຕໍ່ຜູ້ທີ່ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ ....... 20
ມາດຕາ 48 ນະໂຍບາຍຕໍ່ຜູ້ທີ່ມີຜົນງານ ....... 20
ມາດຕາ 49 ມາດຕະການຕໍ່ຜູ້ລະເມີດ ....... 20
ພາກທີ VII ບົດບັນຍັດສຸດທ້າຍ ....... 20
ມາດຕາ 50 ການຈັດຕັ້ງປະຕິບັດ ....... 20
ມາດຕາ 51 ຜົນສັກສິດ ....... 20

**ມາດຕາ 3 ອະທິບາຍສັບ**

ຄຳສັບທີ່ໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ຜູ້ຄວບຄຸມລະບົບຍ່ອຍ ໝາຍເຖິງ** ຜູ້ຄວບຄຸມລະບົບ ແລະ ຜູ້ໃຫ້ບໍລິການ ລະບົບການຊຳລະທຸລະກຳຍ່ອຍໃຫ້ແກ່ສະມາຊິກ ທີ່ໄດ້ຮັບອະນຸຍາດຈາກກົມຄຸ້ມຄອງລະບົບຊຳລະສະສາງ;
2. **ປະເພດຄວາມສ່ຽງຕົ້ນຕໍ** ໝາຍເຖິງ ຄວາມສ່ຽງດ້ານຍຸດທະສາດ (Strategic Risk), ຄວາມສ່ຽງດ້ານສະພາບຄ່ອງ (Liquidity Risk), ຄວາມສ່ຽງດ້ານການດຳເນີນງານ (Operational Risk), ຄວາມສ່ຽງດ້ານກົດໝາຍ (Legal Risk), ຄວາມສ່ຽງດ້ານຊື່ສຽງ (Reputation Risk), ຄວາມສ່ຽງດ້ານເຕັກໂນໂລຊີຂໍ້ມູນຂ່າວສານ (Information Technology Risk);
3. **ກົມຄຸ້ມຄອງລະບົບຊຳລະສະສາງ** ໝາຍເຖິງ ທະນາຄານແຫ່ງ ສປປ ລາວ ທີ່ມີພາລະບົດບາດ ຄຸ້ມຄອງລະບົບຊຳລະສະສາງ ຕາມກົດໝາຍ ວ່າດ້ວຍລະບົບການຊຳລະ ໂດຍມອບໃຫ້ ກົມຄຸ້ມຄອງລະບົບຊຳລະສະສາງ;
4. **ສະມາຊິກ** ໝາຍເຖິງ ຜູ້ທີ່ໄດ້ຮັບອະນຸຍາດເຂົ້າໃຊ້ບໍລິການລະບົບການຊຳລະທຸລະກຳຍ່ອຍ ທາງກົງ ຫຼື ທາງອ້ອມ ຈາກຜູ້ຄວບຄຸມລະບົບຍ່ອຍ;
5. **ຜູ້ໃຫ້ບໍລິການພາຍນອກ (Outsourcing)** ໝາຍເຖິງ ນິຕິບຸກຄົນ ທີ່ຖືກວ່າຈ້າງໂດຍຜູ້ຄວບຄຸມລະບົບຍ່ອຍ ເພື່ອຊ່ວຍໃນການດຳເນີນການແທນໃນການບໍລິຫານຈັດການ ລະບົບເຕັກໂນໂລຊີຂໍ້ມູນຂ່າວສານ ສ່ວນໃດສ່ວນໜຶ່ງຂອງຜູ້ຄວບຄຸມລະບົບຍ່ອຍ ຊຶ່ງຜູ້ຄວບຄຸມລະບົບຍ່ອຍຍັງມີຄວາມຮັບຜິດຊອບຕໍ່ການບໍລິຫານຈັດການລະບົບດັ່ງກ່າວ;
6. **ຜູ້ບໍລິຫານ** ໝາຍເຖິງ ຄະນະອຳນວຍການ, ຜູ້ຈັດການ ຫຼື ຜູ້ທີ່ມີຕຳແໜ່ງທຽບເທົ່າ ຫຼື ຄະນະກຳມະການຂອງຜູ້ຄວບຄຸມລະບົບຍ່ອຍ ທີ່ມີສິດຕັດສິນທຸກການດຳເນີນງານໃນລະບົບການຊຳລະທຸລະກຳຍ່ອຍ;
7. **ອັດຕາສ່ວນຄວາມພຽງພໍຂອງທຶນ** ໝາຍເຖິງ ອັດຕາສ່ວນທີ່ສະແດງເຖິງລະດັບຄວາມສາມາດໃນການຊຳລະໜີ້ສິນໄລຍະສັ້ນ ທີ່ເກີດຈາກການດຳເນີນທຸລະກິດ ຂອງຜູ້ຄວບຄຸມລະບົບຍ່ອຍ.

**ມາດຕາ 4 ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບ ກົມຄຸ້ມຄອງລະບົບຊຳລະສະສາງ, ຜູ້ຄວບຄຸມລະບົບຍ່ອຍ, ສະມາຊິກ ແລະ ພາກສ່ວນທີ່ມີສ່ວນກ່ຽວຂ້ອງກັບ ລະບົບການຊຳລະທຸລະກຳຍ່ອຍ.

## ພາກທີ II
## ລະບົບການຊຳລະທຸລະກຳຍ່ອຍ

**ມາດຕາ 5 ປະເພດລະບົບການຊຳລະທຸລະກຳຍ່ອຍ**

ລະບົບການຊຳລະທຸລະກຳຍ່ອຍ ປະກອບມີ ສາມ ປະເພດ ດັ່ງນີ້:

1. ລະບົບການໂອນເງິນທຸລະກຳຍ່ອຍລະຫວ່າງສະມາຊິກ (Inter-Institution Fund Transfer System);
2. ລະບົບເຄືອຂ່າຍບັດ (Payment Card Network);
3. ລະບົບການຫັກບັນຊີ (Settlement System).

ທະນາຄານແຫ່ງ ສປປ ລາວ ເປັນຜູ້ກຳນົດປະເພດລະບົບການຊຳລະທຸລະກຳຍ່ອຍ ເພີ່ມຕື່ມໃນແຕ່ລະໄລຍະ.

**ມາດຕາ 6 ລະບົບການໂອນເງິນທຸລະກຳຍ່ອຍລະຫວ່າງສະມາຊິກ**

ລະບົບການໂອນເງິນທຸລະກຳຍ່ອຍລະຫວ່າງສະມາຊິກ ແມ່ນລະບົບທີ່ເປັນສູນກາງ ຫຼື ຈຸດເຊື່ອມຕໍ່ຮັບສົ່ງຂໍ້ມູນລາຍການຊຳລະເງິນທາງເອເລັກໂຕຣນິກລະຫວ່າງສະມາຊິກ ຫຼື ເຮັດໜ້າທີ່ໃຫ້ບໍລິການ ການຫັກບັນຊີ ເພື່ອໃຫ້ສະມາຊິກ ສາມາດໃຫ້ບໍລິການຝາກ, ຖອນ, ໂອນ ແລະ ການຊຳລະເງິນແກ່ລູກຄ້າ.

**ມາດຕາ 7 ລະບົບເຄືອຂ່າຍບັດ**

ລະບົບເຄືອຂ່າຍບັດ ແມ່ນລະບົບທີ່ເປັນສູນກາງ ຫຼື ຈຸດເຊື່ອມຕໍ່ຮັບສົ່ງຂໍ້ມູນລາຍການຊຳລະເງິນທາງເອເລັກໂຕຣນິກລະຫວ່າງສະມາຊິກ, ໃຫ້ບໍລິການການຫັກບັນຊີ ແລະ ໃຫ້ບໍລິການດ້ານການຕະຫຼາດ ພາຍໃຕ້ຊື່ທາງທຸລະກິດຂອງຕົນ ເພື່ອສະມາຊິກຊຶ່ງເປັນຜູ້ອອກບັດ ແລະ ຜູ້ໃຫ້ບໍລິການແກ່ຜູ້ຮັບບັດ ໃນ ສປປ ລາວ ສາມາດໃຫ້ບໍລິການການຊຳລະເງິນຈາກບັດສິນເຊື່ອ (Credit), ບັດເງິນຝາກ (Debit), ເງິນເອເລັກໂຕຣນິກ ຫຼື ບັດ ເອເລັກໂຕຣນິກອື່ນໆ.

**ມາດຕາ 8 ລະບົບການຫັກບັນຊີ**

ລະບົບການຫັກບັນຊີ ແມ່ນລະບົບທີ່ໃຫ້ບໍລິການການຫັກບັນຊີແກ່ສະມາຊິກຂອງລະບົບ ໂດຍເຮັດການຫັກບັນຊີເງິນຝາກຂອງສະມາຊິກຂອງລະບົບ ຊຶ່ງມີຖານະເປັນລູກໜີ້ ຫຼື ຮັບຊຳລະໜີ້ດ້ວຍວິທີໃດໜຶ່ງຕາມທີ່ຕົກລົງກັນ ແລ້ວປັບບັນຊີເງິນຝາກຂອງສະມາຊິກຂອງລະບົບ ຊຶ່ງມີຖານະເປັນເຈົ້າໜີ້ ຫຼື ຊຳລະເງິນດ້ວຍວິທີໃດໜຶ່ງ ເພື່ອໃຫ້ໜີ້ດັ່ງກ່າວສິ້ນສຸດ.

**ມາດຕາ 9 ຜູ້ເຂົ້າຮ່ວມໃນລະບົບການຊຳລະທຸລະກຳຍ່ອຍ**

ຜູ້ເຂົ້າຮ່ວມໃນລະບົບການຊຳລະທຸລະກຳຍ່ອຍ ປະກອບດ້ວຍ:

1. ຜູ້ຄວບຄຸມລະບົບຍ່ອຍ;
2. ສະມາຊິກ.

# ພາກທີ III
# ຜູ້ຄວບຄຸມລະບົບຍ່ອຍ
## ໝວດທີ 1
## ການຂໍອະນຸຍາດເປັນຜູ້ຄວບຄຸມລະບົບຍ່ອຍ

**ມາດຕາ 10 ການຂໍອະນຸຍາດເປັນຜູ້ຄວບຄຸມລະບົບຍ່ອຍ**

ຜູ້ທີ່ມີຈຸດປະສົງຢາກເປັນຜູ້ຄວບຄຸມລະບົບຍ່ອຍໃດໜຶ່ງ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 5 ຂອງຂໍ້ຕົກລົງສະບັບນີ້ ຕ້ອງຍື່ນຄຳຮ້ອງ ແລະ ເອກະສານປະກອບ ຕໍ່ກົມຄຸ້ມຄອງລະບົບຊຳລະສະສາງ ພິຈາລະນາດັ່ງນີ້:

1. ຄຳຮ້ອງ ຕາມແບບພິມທີ່ກົມຄຸ້ມຄອງລະບົບຊຳລະສະສາງ ວາງອອກ;
2. ເອກະສານປະກອບ ເປັນພາສາລາວ ດັ່ງນີ້:

2.1. **ຂໍ້ມູນທົ່ວໄປ**

2.1.1. ຊີວະປະຫວັດຫຍໍ້ຂອງ ຜູ້ບໍລິຫານ;

2.1.2. ໃບຢັ້ງຢືນທີ່ຢູ່ຂອງຜູ້ບໍລິຫານ;

2.1.3. ໃບຢັ້ງຢືນແຫຼ່ງທີ່ມາຂອງທຶນ;

2.1.4. ສຳເນົາໃບທະບຽນວິສາຫະກິດ;

2.1.5. ສຳເນົາກົດລະບຽບຂອງບໍລິສັດຕາມແບບພິມ;

2.1.6. ສຳເນົາໃບຢັ້ງຢືນວຸດທິການສຶກສາ ແລະ ໃບຢັ້ງຢືນການຝຶກອົບຮົມ ຂອງຜູ້ບໍລິຫານ;

2.1.7. ໃບແຈ້ງໂທດ ແລະ ໃບຢັ້ງຢືນຈາກສານປະຊາຊົນ ເພື່ອຢັ້ງຢືນວ່າບໍ່ມີສຳນວນຄະດີກ່ຽວກັບຜູ້ທີ່ມີຈຸດປະສົງຂໍອະນຸຍາດດັ່ງກ່າວ ຄ້າງຄາຢູ່ສານປະຊາຊົນ (ເອກະສານບໍ່ກາຍ ສາມ ເດືອນ);

2.1.8. ແຜນການດຳເນີນທຸລະກິດຂອງຕົນຢ່າງລະອຽດ ສາມ ປີ ພາຍຫຼັງທີ່ໄດ້ຮັບການອະນຸຍາດເປັນຕົ້ນໄປ;

2.1.9. ສຳເນົາປຶ້ມບັນຊີທະບຽນຜູ້ຖືຮຸ້ນ;

2.1.10. ບົດລາຍງານການດຳເນີນທຸລະກິດ ແລະ ເອກະສານລາຍງານການເງິນ ໜຶ່ງ ປີຍ້ອນຫຼັງ ກ່ອນປີຍື່ນເອກະສານປະກອບຂໍອະນຸຍາດ, ຍົກເວັ້ນບໍລິສັດທີ່ສ້າງຕັ້ງຂຶ້ນໃໝ່.

2.2. **ຂໍ້ມູນການໃຫ້ບໍລິການຂອງລະບົບ**

2.2.1. ໂຄງຮ່າງການຈັດຕັ້ງ ແລະ ການຄຸ້ມຄອງບໍລິຫານ ເພື່ອຮອງຮັບການປະກອບທຸລະກິດ ໂດຍສະແດງໃຫ້ເຫັນເຖິງໜ່ວຍງານ ແລະ ພະນັກງານທີ່ປະຕິບັດໜ້າທີ່ລວມທັງລະບຸໜ້າທີ່ຄວາມຮັບຜິດຊອບ ຊຶ່ງຄວບຄຸມດ້ານລະບົບເຕັກໂນໂລຊີຂໍ້ມູນຂ່າວສານ;

2.2.2. ລາຍລະອຽດກ່ຽວກັບການໃຫ້ບໍລິການລະບົບ ຄື:

1) ຊື່ ແລະ ປະເພດການໃຫ້ບໍລິການ;
2) ລາຍລະອຽດກ່ຽວກັບ ເງື່ອນໄຂ ແລະຮູບແບບການໃຫ້ບໍລິການ ແລະ ຂອບເຂດການໃຫ້ບໍລິການ ເປັນຕົ້ນ ກຸ່ມສະມາຊິກ, ປະເພດ, ສະຖານທີ່ ແລະ ຄ່າທຳນຽມການໃຫ້ບໍລິການ;
3) ລາຍລະອຽດກ່ຽວກັບ ຂະບວນການ, ວິທີການ ແລະ ຂັ້ນຕອນໃນການໃຫ້ບໍລິການລະບົບ ຄື:
   - ແຜນພາບລະບົບການດຳເນີນງານ;
   - ອະທິບາຍລະອຽດກ່ຽວກັບເຕັກໂນໂລຊີທີ່ໃຊ້ໃນການໃຫ້ບໍລິການລະບົບ ແລະ ເຕັກໂນໂລຊີທີ່ໃຊ້ໃນການຮັກສາຄວາມໝັ້ນຄົງປອດໄພຂອງລະບົບທີ່ໃຫ້ບໍລິການ;
   - ແນວທາງການເຊື່ອມໂຍງກັບລະບົບການດຳເນີນງານອື່ນໆ ທີ່ກ່ຽວຂ້ອງ;

2.2.3. ຈຳນວນ ແລະ ລາຍຊື່ສະມາຊິກຂອງລະບົບ (ຖ້າມີ);

2.2.4. ລະບຽບການໃນການເຂົ້າຮ່ວມ ແລະ ອອກຈາກລະບົບຂອງສະມາຊິກ (Access & Exit Regime) ຊຶ່ງປະກອບມີເນື້ອໃນຕົ້ນຕໍ ດັ່ງນີ້: ຈຸດປະສົງ, ຫຼັກການ, ເງື່ອນໄຂ, ວິທີປະຕິບັດ, ຄ່າທຳນຽມ ແລະ ຄ່າໃຊ້ຈ່າຍອື່ນໆທີ່ກ່ຽວຂ້ອງ;

2.2.5. ຜູ້ໃຫ້ບໍລິການພາຍນອກ (Outsourcing) ພ້ອມດ້ວຍ ສັນຍາ ຫຼື ຂໍ້ຜູກພັນທີ່ລະບຸເຖິງໜ້າທີ່ຄວາມຮັບຜິດຊອບ ລະຫວ່າງຜູ້ທີ່ມີຈຸດປະສົງເປັນຜູ້ຄວບຄຸມລະບົບຍ່ອຍ ແລະ ຜູ້ທີ່ກ່ຽວຂ້ອງໃນການໃຫ້ບໍລິການລະບົບຂອງຕົນ (ຖ້າມີ).

2.3. ລະບຽບການ ແລະ ມາດຕະຖານ ກ່ຽວກັບການຮັກສາຄວາມໝັ້ນຄົງປອດໄພທາງດ້ານລະບົບເຕັກໂນໂລຊີຂໍ້ມູນຂ່າວສານ ຊຶ່ງຢ່າງໜ້ອຍ ຕ້ອງມີມາດຕະຖານຕາມຂໍ້ຕົກລົງ ວ່າດ້ວຍມາດຕະການ ການຮັກສາຄວາມໝັ້ນຄົງປອດໄພທາງດ້ານລະບົບເຕັກໂນໂລຊີຂໍ້ມູນຂ່າວສານ ຂອງ ທະນາຄານແຫ່ງ ສປປ ລາວ;

2.4. ແຜນການດໍາເນີນທຸລະກິດ ກ່ຽວກັບລະບົບການຊໍາລະ ໃນໄລຍະເວລາ ສາມ ປີ ເປັນຕົ້ນການລົງທຶນໃນລະບົບ, ລາຍຮັບ-ລາຍຈ່າຍ, ປະລິມານທຸລະກໍາ ແລະ ການບໍລິການທີ່ຈະເພີ່ມຂຶ້ນ ແລະ ແຫຼ່ງທີ່ມາຂອງເງິນທຶນ ລວມທັງບົດວິພາກເສດຖະກິດ-ເຕັກນິກ (Feasibility Study) ທີ່ຍົກໃຫ້ເຫັນ ການວິເຄາະຄູ່ແຂ່ງ, ການຕະຫຼາດ, ສະພາບແວດລ້ອມພາຍໃນ ແລະ ພາຍນອກ ພ້ອມລະບຸສົມມຸດຖານທີ່ໃຊ້ໃນການສ້າງແຜນການ ແລະ ຄ່າປະມານການດັ່ງກ່າວ;

2.5. ແຜນການຈັດຕັ້ງປະຕິບັດ ຮອງຮັບການດໍາເນີນທຸລະກິດ ໂດຍສະແດງລາຍລະອຽດການກະກຽມໃນແຕ່ລະໄລຍະເວລາ (Timeline) (ຖ້າມີ);

2.6. ລະບຽບການກ່ຽວກັບການບໍລິຫານຄວາມສ່ຽງ ຊຶ່ງປະກອບມີເນື້ອໃນຕົ້ນຕໍ ຄື: ປະເພດຄວາມສ່ຽງຕົ້ນຕໍ, ການປະເມີນຄວາມສ່ຽງໃນການໃຫ້ບໍລິການລະບົບ ໂດຍລະບຸຕົວຊີ້ວັດຄວາມສ່ຽງທີ່ສໍາຄັນ ແລະ ໜ້າທີ່ຮັບຜິດຊອບຂອງຜູ້ກ່ຽວຂ້ອງ ລວມທັງຂະບວນການບໍລິຫານ ແລະ ຈັດການຄວາມສ່ຽງຕົ້ນຕໍ ທີ່ຄວບຄຸມເຖິງວິທີການຊີ້ວັດ, ຄວບຄຸມ, ຕິດຕາມ ແລະ ບໍລິຫານຈັດການຄວາມສ່ຽງຕົ້ນຕໍ ຂອງຜູ້ຄວບຄຸມລະບົບຍ່ອຍ;

2.7. ແຜນການວິເຄາະຜົນກະທົບ (Business Impact Analysis: BIA) ແລະ ການບໍລິຫານຄວາມຕໍ່ເນື່ອງທາງທຸລະກິດ (Business Continuity Management: BCM) ໂດຍຜູ້ທີ່ມີຈຸດປະສົງເປັນຜູ້ຄວບຄຸມລະບົບຍ່ອຍ ຕ້ອງກໍານົດຜູ້ຮັບຜິດຊອບ ແລະ ລາຍລະອຽດການບໍລິຫານຄວາມຕໍ່ເນື່ອງທາງທຸລະກິດໃຫ້ເໝາະສົມກັບປະເພດ ແລະ ຄວາມສະຫຼັບຊັບຊ້ອນ (Complexity) ຂອງລະບົບທີ່ຕົນໃຫ້ບໍລິການ ຊຶ່ງມີເນື້ອໃນ ດັ່ງນີ້:

2.7.1. ກໍານົດນະໂຍບາຍ ການບໍລິຫານຄວາມຕໍ່ເນື່ອງທາງທຸລະກິດ (BCM);

2.7.2. ແຜນຮອງຮັບຄວາມຕໍ່ເນື່ອງຂອງການດໍາເນີນທຸລະກິດ (Business Continuity Planning: BCP);

2.7.3. ກໍານົດແນວທາງຕິດຕາມແລະປະເມີນຜົນ ແລະ ແນວທາງການທົດສອບແຜນ (BCP);

2.8. ລະບົບການຄວບຄຸມພາຍໃນ ຊຶ່ງກວມເອົາການກວດສອບລາຍການຜິດປົກກະຕິ ໂດຍລະບຸໜ້າທີ່ຮັບຜິດຊອບຂອງໜ່ວຍງານທີ່ກ່ຽວຂ້ອງໃນການຄຸ້ມຄອງ, ຄວບຄຸມ ແລະ ກວດສອບການດໍາເນີນງານ;

2.9. ແນວທາງ ແລະ ລາຍລະອຽດການໃຊ້ບໍລິການຈາກ ຜູ້ໃຫ້ບໍລິການພາຍນອກ (Outsourcing) ມາດໍາເນີນງານແທນທາງດ້ານລະບົບເຕັກໂນໂລຊີຂໍ້ມູນຂ່າວສານ ທີ່ກ່ຽວຂ້ອງກັບການໃຫ້ບໍລິການລະບົບ ລວມທັງລະບົບທີ່ມີຜົນກະທົບທີ່ສໍາຄັນຕໍ່ການໃຫ້ບໍລິການ ດັ່ງນີ້:

2.9.1. ໄລຍະເວລາ, ຂອບເຂດການໃຊ້ບໍລິການ ແລະ ໜ້າທີ່ຮັບຜິດຊອບຂອງຜູ້ກ່ຽວຂ້ອງໃນການໃຫ້ບໍລິການ;

2.9.2. ຫຼັກການຄັດເລືອກ, ຕິດຕາມ ແລະ ປະເມີນຄວາມສ່ຽງຂອງການໃຊ້ບໍລິການ;

2.9.3. ສັນຍາການໃຊ້ບໍລິການຈາກຜູ້ໃຫ້ບໍລິການພາຍນອກ;

2.9.4. ແຜນຮອງຮັບຄວາມຕໍ່ເນື່ອງຂອງການດຳເນີນທຸລະກິດ (BCP) ກ່ຽວກັບການໃຊ້ບໍລິການຈາກຜູ້ໃຫ້ບໍລິການພາຍນອກ;

2.10. ນະໂຍບາຍ ແລະ ມາດຕະການຕ້ານ ສະກັດກັ້ນ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ;

2.11. ລະບຽບການກ່ຽວກັບ ການປົກປ້ອງສະມາຊິກ ເປັນຕົ້ນ ລະບຽບການໃຫ້ບໍລິການ, ການເກັບຮັກສາຂໍ້ມູນສ່ວນຕົວຂອງສະມາຊິກ ແລະ ການແກ້ໄຂຂໍ້ຂັດແຍ່ງ;

2.12. ລາຍລະອຽດເພີ່ມຕື່ມ ສະເພາະການໃຫ້ບໍລິການລະບົບ ຄື:

2.12.1. ການໃຫ້ບໍລິການລະບົບໂອນເງິນທຸລະກຳຍ່ອຍລະຫວ່າງສະມາຊິກ (Inter-Institution Fund Transfer System) ແລະ ການໃຫ້ບໍລິການລະບົບເຄືອຂ່າຍບັດ (Payment Card Network):

- ມາດຕະການ ໃນການບໍລິຫານຄວາມສ່ຽງ ເພື່ອໃຫ້ການຫັກບັນຊີລະຫວ່າງສະມາຊິກສຳເລັດ;
- ຂະບວນການ ແລະ ວິທີປະຕິບັດທີ່ເໝາະສົມ ເພື່ອຮອງຮັບກໍລະນີສະມາຊິກລາຍໃດໜຶ່ງບໍ່ສາມາດຫັກບັນຊີໄດ້ ເຊັ່ນ: ການແຈ້ງສະມາຊິກລາຍອື່ນ, ການຢຸດຮັບສິ່ງຄຳສັ່ງ ແລະ ການໄລ່ລຽງການຫັກບັນຊີໃໝ່ ໂດຍ ນຳຄຳສັ່ງຂອງສະມາຊິກທີ່ບໍ່ສາມາດຫັກບັນຊີໄດ້ອອກ (Unwind);

2.12.2. ການໃຫ້ບໍລິການລະບົບການຫັກບັນຊີ (Settlement System);

- ຫຼັກການ, ເງື່ອນໄຂ ແລະ ຂັ້ນຕອນກ່ຽວກັບ ຜົນຂອງການຊຳລະ (Settlement Finality) ເປັນຕົ້ນ ໄລຍະເວລາໃນການຊຳລະ, ຈຸດຫັກບັນຊີສຸດທ້າຍ (Point of Finality) ແລະ ການແກ້ໄຂ, ດັດແກ້, ຍົກເລີກ, ຖອນ, ຄັດຄ້ານ ຫຼື ແກ້ໄຂລາຍການທຸລະກຳ ທີ່ມີຄວາມຜິດພາດ ຫຼື ບໍ່ຖືກຕ້ອງ.

**ມາດຕາ 11 ເງື່ອນໄຂການເປັນຜູ້ຄວບຄຸມລະບົບຍ່ອຍ**

ຜູ້ທີ່ມີຈຸດປະສົງເປັນຜູ້ຄວບຄຸມລະບົບຍ່ອຍ ຕ້ອງມີເງື່ອນໄຂຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 28 ຂອງກົດໝາຍວ່າດ້ວຍລະບົບການຊຳລະ ແລະ ມີເງື່ອນໄຂເພີ່ມຕື່ມ ດັ່ງນີ້:

1. ເປັນບໍລິສັດທີ່ຂຶ້ນທະບຽນວິສາຫະກິດໃນ ສປປ ລາວ ຍົກເວັ້ນບໍລິສັດຈຳກັດຜູ້ດຽວ;
2. ສະຖາບັນການເງິນ ແລະ ນິຕິບຸກຄົນອື່ນ ທີ່ມີຈຸດປະສົງເປັນຜູ້ຄວບຄຸມລະບົບຍ່ອຍ ຕ້ອງສ້າງຕັ້ງເປັນນິຕິບຸກຄົນສະເພາະ ຍົກເວັ້ນ ລະບົບການຫັກບັນຊີ ທະນາຄານທຸລະກິດສາມາດເປັນຜູ້ຄວບຄຸມລະບົບຍ່ອຍໄດ້;
3. ມີທຶນຈົດທະບຽນ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 12 ຂອງຂໍ້ຕົກລົງສະບັບນີ້;
4. ມີຜູ້ຖືຮຸ້ນ ທີ່ຖືສັນຊາດລາວ ແລະ ມີພູມລຳເນົາຢູ່ ສປປ ລາວ ຖືຮຸ້ນຢ່າງໜ້ອຍ ສິບສ່ວນຮ້ອຍຂອງຈຳນວນຮຸ້ນທັງໝົດ;
5. ມີຜູ້ບໍລິຫານ ທີ່ຖືສັນຊາດລາວ ແລະ ມີພູມລຳເນົາຢູ່ ສປປ ລາວ ຢ່າງໜ້ອຍ ໜຶ່ງ ຄົນ;
6. ມີແຜນການດຳເນີນທຸລະກິດຂອງຕົນຢ່າງລະອຽດ ສາມ ປີ ຕໍ່ໜ້າ.

**ມາດຕາ 12 ທຶນຈົດທະບຽນ**

ຜູ້ທີ່ມີຈຸດປະສົງເປັນຜູ້ຄວບຄຸມລະບົບຍ່ອຍ ຕ້ອງມີທຶນຈົດທະບຽນ ຕາມແຕ່ລະປະເພດ ດັ່ງນີ້:

1. ລະບົບໂອນເງິນທຸລະກຳຍ່ອຍລະຫວ່າງສະມາຊິກ (Inter-Institution Fund Transfer System) ຢ່າງໜ້ອຍ ສິບ ຕື້ກີບ;
2. ລະບົບເຄືອຂ່າຍບັດ (Payment Card Network) ຢ່າງໜ້ອຍ ສິບ ຕື້ກີບ;
3. ລະບົບຫັກບັນຊີ (Settlement System) ຢ່າງໜ້ອຍ ສີ່ສິບ ຕື້ກີບ.

ຜູ້ທີ່ມີຈຸດປະສົງເປັນຜູ້ຄວບຄຸມລະບົບຍ່ອຍ ຫຼາຍກວ່າ ໜຶ່ງ ປະເພດ ຕ້ອງມີທຶນຈົດທະບຽນ ຢ່າງໜ້ອຍ ຕາມປະເພດກິດຈະການໃຫ້ບໍລິການລະບົບ ທີ່ກຳນົດໄວ້ສູງກວ່າ.

ທຶນຈົດທະບຽນ ມີອັດຕາສ່ວນເປັນເງິນສົດບໍ່ຕ່ຳກວ່າ ເຈັດສິບສ່ວນຮ້ອຍຂອງທຶນຈົດທະບຽນທັງໝົດ.

ຜູ້ທີ່ມີຈຸດປະສົງເປັນຜູ້ຄວບຄຸມລະບົບຍ່ອຍ ຕ້ອງຖອກທຶນຈົດທະບຽນໃຫ້ຄົບຖ້ວນ ເຂົ້າບັນຊີເງິນຝາກຂອງຕົນຢູ່ກົມບໍລິການທະນາຄານ ນັບແຕ່ວັນທີ່ໄດ້ຮັບອະນຸຍາດ.

ທຶນຈົດທະບຽນ ແມ່ນນຳໃຊ້ເຂົ້າໃນການກະກຽມຄວາມພ້ອມໃນການໃຫ້ບໍລິການລະບົບ ຫຼື ການເຄື່ອນໄຫວອື່ນ ຕ້ອງມີແຜນນຳໃຊ້ທຶນດັ່ງກ່າວຢ່າງລະອຽດ ແລະ ໄດ້ຮັບອະນຸຍາດຈາກກົມຄຸ້ມຄອງລະບົບຊຳລະສະສາງ.

**ມາດຕາ 13 ການພິຈາລະນາ**

ກົມຄຸ້ມຄອງລະບົບຊຳລະສະສາງ ຕ້ອງພິຈາລະນາການຂໍອະນຸຍາດເປັນຜູ້ຄວບຄຸມລະບົບຍ່ອຍ ພາຍໃນກຳນົດເວລາ ສີ່ສິບຫ້າ ວັນ ນັບແຕ່ວັນໄດ້ຮັບເອກະສານປະກອບຄົບຖ້ວນ ແລະ ຖືກຕ້ອງ ເປັນຕົ້ນໄປ. ກໍລະນີປະຕິເສດ ຕ້ອງແຈ້ງຕອບເປັນລາຍລັກອັກສອນ ພ້ອມດ້ວຍເຫດຜົນ.

ໃນເວລາພິຈາລະນາການຂໍອະນຸຍາດເປັນຜູ້ຄວບຄຸມລະບົບຍ່ອຍ ຖ້າເຫັນວ່າມີຄວາມຈຳເປັນ ກົມຄຸ້ມຄອງລະບົບຊຳລະສະສາງ ມີສິດທວງເອົາເອກະສານ ແລະ ຂໍ້ມູນເພີ່ມຕື່ມທີ່ກ່ຽວຂ້ອງ ຈາກຜູ້ທີ່ມີຈຸດປະສົງເປັນຜູ້ຄວບຄຸມລະບົບຍ່ອຍ ຫຼື ພາກສ່ວນທີ່ກ່ຽວຂ້ອງ.

**ມາດຕາ 14 ການນຳໃຊ້ ແລະ ອາຍຸການນຳໃຊ້ ໃບອະນຸຍາດ**

ຜູ້ຄວບຄຸມລະບົບຍ່ອຍ ຕ້ອງນຳໃຊ້ໃບອະນຸຍາດໃຫ້ຖືກຕ້ອງຕາມຂອບເຂດທີ່ໄດ້ຮັບອະນຸຍາດ ໂດຍບໍ່ມີສິດມອບ, ໂອນ ຫຼື ໃຫ້ບຸກຄົນອື່ນນຳໃຊ້ແທນ.

ໃບອະນຸຍາດ ມີອາຍຸການນຳໃຊ້ ຫ້າ ປີ ນັບແຕ່ວັນໄດ້ຮັບໃບອະນຸຍາດ ເປັນຕົ້ນໄປ. ກໍລະນີ ມີຈຸດປະສົງສືບຕໍ່ເປັນຜູ້ຄວບຄຸມລະບົບຍ່ອຍ ຕ້ອງຍື່ນຄຳຮ້ອງຂໍຕໍ່ອາຍຸໃບອະນຸຍາດ ຕໍ່ກົມຄຸ້ມຄອງລະບົບຊຳລະສະສາງ ຢ່າງໜ້ອຍ ສີ່ສິບຫ້າ ວັນ ກ່ອນວັນໝົດອາຍຸການນຳໃຊ້.

**ມາດຕາ 15 ການເຜີຍແຜ່ຕໍ່ສື່ມວນຊົນ**

ຜູ້ຄວບຄຸມລະບົບຍ່ອຍ ຕ້ອງປະກາດກ່ຽວກັບການອະນຸຍາດໃຫ້ເປັນຜູ້ຄວບຄຸມລະບົບຍ່ອຍ ໃຫ້ມວນຊົນຮັບຊາບ ໂດຍຜ່ານພະຫະນະສື່ມວນຊົນ ຢ່າງໜ້ອຍ ຫ້າ ວັນລັດຖະການຢ່າງຕໍ່ເນື່ອງ ນັບແຕ່ວັນໄດ້ຮັບອະນຸຍາດ ຈາກກົມຄຸ້ມຄອງລະບົບຊຳລະສະສາງ ເປັນຕົ້ນໄປ.

### ມາດຕາ 16 ຄ່າທຳນຽມ, ຄ່າບໍລິການ ແລະ ຄ່າຄຸ້ມຄອງປະຈຳປີ

ຄ່າທຳນຽມ, ຄ່າບໍລິການ ແລະ ຄ່າຄຸ້ມຄອງປະຈຳປີ ທີ່ກ່ຽວຂ້ອງກັບການຂໍອະນຸຍາດ ແລະ ການດຳເນີນທຸລະກິດຂອງຜູ້ຄວບຄຸມລະບົບຍ່ອຍ ດັ່ງນີ້:

1. ຄ່າບໍລິການໃນການຄົ້ນຄວ້າອະນຸຍາດ ເປັນຜູ້ຄວບຄຸມລະບົບຍ່ອຍ ຈຳນວນ ສອງລ້ານ ກີບ ຕໍ່ຄັ້ງ ສຳລັບການຂໍອະນຸຍາດໃໝ່ ແລະ ສຳລັບການຕໍ່ໃບອະນຸຍາດ ຈຳນວນ ໜຶ່ງລ້ານ ກີບ ຕໍ່ຄັ້ງ ໂດຍຊຳລະໃນເວລາຍື່ນສຳນວນຄຳຮ້ອງ ທີ່ກົມບໍລິການທະນາຄານ;
2. ຄ່າທຳນຽມໃນການອອກໃບອະນຸຍາດ ເປັນຜູ້ຄວບຄຸມລະບົບຍ່ອຍ ຈຳນວນ ສູນຈຸດໜຶ່ງສ່ວນຮ້ອຍຂອງທຶນຈົດທະບຽນ ໂດຍຊຳລະພາຍໃນວັນທີ່ໄດ້ຮັບອະນຸຍາດ ທີ່ກົມບໍລິການທະນາຄານ;
3. ຄ່າຄຸ້ມຄອງປະຈຳປີ ຈຳນວນ ສູນຈຸດໜຶ່ງສ່ວນຮ້ອຍ ຂອງລາຍຮັບທັງໝົດປະຈຳປີ ແຕ່ບໍ່ໃຫ້ຫຼຸດສາມສິບລ້ານ ກີບ ຕໍ່ປີ ໂດຍຊຳລະພາຍໃນໄຕມາດທີໜຶ່ງ ຂອງປີຖັດໄປ ທີ່ກົມບໍລິການທະນາຄານ. ການຄິດໄລ່ຄ່າຄຸ້ມຄອງປະຈຳປີ ແມ່ນເລີ່ມແຕ່ປີໄດ້ຮັບອະນຸຍາດເປັນຜູ້ຄວບຄຸມລະບົບຍ່ອຍ ເປັນຕົ້ນໄປ.

## ໝວດທີ 2
## ການດຳເນີນງານຂອງຜູ້ຄວບຄຸມລະບົບຍ່ອຍ

### ມາດຕາ 17 ການດຳເນີນງານຂອງຜູ້ຄວບຄຸມລະບົບຍ່ອຍ

ຜູ້ຄວບຄຸມລະບົບຍ່ອຍ ຕ້ອງດຳເນີນການຄວບຄຸມລະບົບການຊຳລະທຸລະກຳຍ່ອຍ ຕາມຫຼັກການ ດັ່ງນີ້:

1. ຄວາມໝັ້ນຄົງທາງການເງິນ;
2. ການຄຸ້ມຄອງບໍລິຫານ;
3. ການບໍລິຫານຄວາມສ່ຽງ ແລະ ຄວາມປອດໄພ;
4. ການປົກປ້ອງສະມາຊິກ;
5. ການສົ່ງເສີມໃຫ້ມີການແຂ່ງຂັນ.

### ມາດຕາ 18 ຄວາມໝັ້ນຄົງທາງການເງິນ

ຜູ້ຄວບຄຸມລະບົບຍ່ອຍ ຕ້ອງມີຖານະການເງິນທີ່ໝັ້ນຄົງ ແລະ ພຽງພໍ ໃນການດຳເນີນທຸລະກິດ ແລະ ຮັບປະກັນການໃຫ້ບໍລິການລະບົບໄດ້ຢ່າງຕໍ່ເນື່ອງ.

ຜູ້ຄວບຄຸມລະບົບຍ່ອຍ ຕ້ອງຮັບປະກັນໃຫ້ຕົນມີຖານະການເງິນ ດັ່ງນີ້:

1. ມີທຶນຈົດທະບຽນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 12 ຂອງຂໍ້ຕົກລົງສະບັບນີ້, ບໍ່ສາມາດຫຼຸດທຶນຈົດທະບຽນ ກ່ອນໄດ້ຮັບອະນຸຍາດຈາກກົມຄຸ້ມຄອງລະບົບຊຳລະສະສາງ. ກໍລະນີ ເພີ່ມທຶນຈົດທະບຽນ ຕ້ອງແຈ້ງໃຫ້ແກ່ກົມຄຸ້ມຄອງລະບົບຊຳລະສະສາງຊາບ ຢ່າງເປັນລາຍລັກອັກສອນພາຍໃນກຳນົດ ສິບຫ້າ ວັນ ນັບແຕ່ວັນຈົດທະບຽນເພີ່ມທຶນ ເປັນຕົ້ນໄປ;
2. ມີອັດຕາສ່ວນຄວາມພຽງພໍຂອງທຶນ ຕາມການກຳນົດຂອງກົມຄຸ້ມຄອງລະບົບຊຳລະສະສາງ ໃນແຕ່ລະໄລຍະ;
3. ມີຖານະການເງິນ ແລະ ການດຳເນີນງານທີ່ໝັ້ນຄົງ ຊຶ່ງສະແດງໃຫ້ເຫັນວ່າ ສາມາດດຳເນີນທຸລະກິດ ແລະ ໃຫ້ບໍລິການໄດ້ຢ່າງຕໍ່ເນື່ອງ ແລະ ບໍ່ມີຄວາມສ່ຽງທີ່ອາດກໍ່ໃຫ້ເກີດຄວາມເສຍຫາຍຕໍ່ສະມາຊິກ ເປັນຕົ້ນ ຖານະທາງການເງິນ ແລະການດຳເນີນທຸລະກິດທີ່ຜ່ານມາ ແລະ ອັດຕາສ່ວນຂອງຜູ້ຖືຮຸ້ນ;

4. ມີແຜນການດຳເນີນທຸລະກິດ ເປັນຕົ້ນ ແຜນການລົງທຶນ, ລາຍຮັບ-ລາຍຈ່າຍ ແລະ ງົບປະມານປະຈຳປີ ໂດຍຕ້ອງກະກຽມງົບປະມານໃຫ້ພຽງພໍສຳລັບຮອງຮັບແຜນການລົງທຶນ ແລະ ການດຳເນີນທຸລະກິດຢ່າງຕໍ່ເນື່ອງ ພ້ອມທັງເກັບມ້ຽນແຜນການດຳເນີນທຸລະກິດ ທີ່ໄດ້ຜ່ານການເຫັນດີຈາກຜູ້ບໍລິຫານຂອງຕົນ ເພື່ອສາມາດສະໜອງໃຫ້ແກ່ກົມຄຸ້ມຄອງລະບົບຊຳລະສະສາງ.

**ມາດຕາ 19 ການຄຸ້ມຄອງບໍລິຫານ**

ຜູ້ຄວບຄຸມລະບົບຍ່ອຍ ຕ້ອງປະຕິບັດຕາມຫຼັກການຄຸ້ມຄອງບໍລິຫານ ດັ່ງນີ້:

1. ການດຳເນີນທຸລະກິດຕາມທີ່ໄດ້ຮັບອະນຸຍາດ;
2. ໜ້າທີ່ ແລະ ຄວາມຮັບຜິດຊອບຂອງຜູ້ບໍລິຫານ;
3. ການຄວບຄຸມພາຍໃນ;
4. ການປ່ຽນແປງອຳນາດການຄວບຄຸມກິດຈະການ;

**ມາດຕາ 20 ການດຳເນີນທຸລະກິດຕາມທີ່ໄດ້ຮັບອະນຸຍາດ**

ຜູ້ຄວບຄຸມລະບົບຍ່ອຍ ຕ້ອງປະຕິບັດຕາມເງື່ອນໄຂການເປັນຜູ້ຄວບຄຸມລະບົບຍ່ອຍ ເພື່ອຮັບປະກັນການດຳເນີນທຸລະກິດຂອງຕົນ ໃຫ້ຖືກຕ້ອງຕາມທີ່ໄດ້ຮັບອະນຸຍາດ ດັ່ງນີ້:

1. ດຳເນີນທຸລະກິດ ໂດຍປະຕິບັດຕາມແຜນການ, ນະໂຍບາຍ, ມາດຕະການ ແລະ ລະບົບຕ່າງໆ ຕາມທີ່ໄດ້ຮັບອະນຸຍາດຈາກກົມຄຸ້ມຄອງລະບົບຊຳລະສະສາງ;
2. ຄຸ້ມຄອງ ແລະ ທົບທວນ ມາດຕະຖານ, ເງື່ອນໄຂ ແລະ ຄຸນສົມບັດ ຂອງຜູ້ບໍລິຫານ ເພື່ອໃຫ້ສອດຄ່ອງກັບຂໍ້ຕົກລົງສະບັບນີ້ ແລະ ກົດໝາຍທີ່ກ່ຽວຂ້ອງ;
3. ມີຜູ້ບໍລິຫານທີ່ມີຄວາມຮູ້, ຄວາມສາມາດ, ຄຸນສົມບັດ ແລະ ເງື່ອນໄຂຄົບຖ້ວນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ. ພ້ອມນີ້ ໃຫ້ມີຜູ້ບໍລິຫານ ທີ່ຖືສັນຊາດລາວ ແລະ ມີພູມລຳເນົາຢູ່ໃນ ສປປ ລາວ ຢ່າງໜ້ອຍ ໜຶ່ງຄົນ. ກໍລະນີ ຜູ້ບໍລິຫານດັ່ງກ່າວພົ້ນອອກຈາກຕຳແໜ່ງ ຕ້ອງແຕ່ງຕັ້ງຜູ້ທີ່ຄົບເງື່ອນໄຂ ມາປ່ຽນແທນພາຍໃນ ສີ່ສິບຫ້າ ວັນ ນັບແຕ່ວັນທີ່ຜູ້ກ່ຽວພົ້ນຈາກຕຳແໜ່ງ ເປັນຕົ້ນໄປ;
4. ລາຍງານກ່ຽວກັບ ການປ່ຽນແປງຜູ້ບໍລິຫານ ຕໍ່ກົມຄຸ້ມຄອງລະບົບຊຳລະສະສາງຊາບ ຜ່ານທາງເອເລັກໂຕຣນິກ ຫຼື ເປັນລາຍລັກອັກສອນ ພາຍໃນ ສິບຫ້າ ວັນ ລັດຖະການ ນັບແຕ່ວັນທີ່ມີການປ່ຽນແປງ ເປັນຕົ້ນໄປ.

**ມາດຕາ 21 ໜ້າທີ່ ແລະ ຄວາມຮັບຜິດຊອບຂອງຜູ້ບໍລິຫານ**

ຜູ້ບໍລິຫານ ມີໜ້າທີ່ ແລະ ຄວາມຮັບຜິດຊອບ ດັ່ງນີ້:

1. ກຳນົດແຜນຍຸດທະສາດ, ນະໂຍບາຍ ແລະ ແຜນການດຳເນີນທຸລະກິດ ພ້ອມທັງຈັດຕັ້ງເຜີຍແຜ່ແຜນການດັ່ງກ່າວ ໃຫ້ແກ່ພະນັກງານຂອງຕົນຊາບ;
2. ເປັນເຈົ້າການໃນການບໍລິຫານຄວາມສ່ຽງ ຄື:
   - ກຳນົດນະໂຍບາຍ ແລະ ມາດຕະການບໍລິຫານຄວາມສ່ຽງ ທີ່ມີປະສິດທິພາບ ເພື່ອຮອງຮັບຄວາມສ່ຽງທີ່ສຳຄັນຕ່າງໆ ໂດຍຄຳນຶງເຖິງຮູບແບບຄວາມສະຫຼັບຊັບຊ້ອນ ແລະ ຍຸດທະສາດໃນການດຳເນີນທຸລະກິດ ພ້ອມທັງທົບທວນນະໂຍບາຍ ແລະ ມາດຕະການດັ່ງກ່າວ ຢ່າງເປັນປະຈຳ ຫຼື ທຸກຄັ້ງທີ່ມີເຫດການ ຫຼື ມີການປ່ຽນແປງ ທີ່ອາດສົ່ງຜົນກະທົບຕໍ່ການໃຫ້ບໍລິການທີ່ສຳຄັນ;

- ຕິດຕາມ ແລະ ປະເມີນຜົນ ຂອງການປະເມີນຄວາມສ່ຽງ, ຜົນໄດ້ຮັບຈາກການດຳເນີນທຸລະກິດ ທຽບກັບແຜນການບໍລິຫານຄວາມສ່ຽງ, ລະດັບຄວາມສ່ຽງ ຫຼື ແນວໂນ້ມຄວາມສ່ຽງທີ່ອາດຈະເກີດຂຶ້ນ;

3. ສ້າງລະບົບການຄວບຄຸມພາຍໃນ ໂດຍມີການທົບທວນ, ຖ່ວງດຸນອຳນາດຢ່າງເໝາະສົມ ແລະ ກຳນົດໃຫ້ມີບຸກຄະລາກອນ ຫຼື ໜ່ວຍງານທີ່ມີໜ້າທີ່ຮັບຜິດຊອບ ການບໍລິຫານຄວາມສ່ຽງ ແລະ ກວດສອບ ເພື່ອໃຫ້ການດຳເນີນທຸລະກິດຖືກຕ້ອງ ຕາມກົດໝາຍ ແລະ ລະບຽບການ;
4. ສ້າງລະບົບລາຍງານການດຳເນີນທຸລະກິດ ທີ່ເປັນການລະເມີດລະບຽບກົດໝາຍ, ລະບຽບການຂອງຜູ້ຄຸ້ມຄອງ ແລະ ລະບຽບການບໍລິຫານພາຍໃນຂອງຕົນ ເພື່ອເຮັດໃຫ້ຜູ້ບໍລິຫານ ຫຼື ໜ່ວຍງານທີ່ກ່ຽວຂ້ອງ ສາມາດຕິດຕາມ ຫຼື ແກ້ໄຂ ເພື່ອບໍ່ໃຫ້ເກີດຄວາມເສຍຫາຍ ຫຼື ຜົນກະທົບຕໍ່ການດຳເນີນທຸລະກິດ;
5. ກຳນົດວິທີການຈົດບັນທຶກ ແລະ ເກັບຮັກສາບັນຊີ ແລະ ເອກະສານທີ່ກ່ຽວຂ້ອງ ເພື່ອສະແດງຖານະທາງການເງິນ ແລະ ຜົນການດຳເນີນທຸລະກິດທີ່ແທ້ຈິງຂອງຜູ້ຄວບຄຸມລະບົບຍ່ອຍ.

### ມາດຕາ 22 ການຄວບຄຸມພາຍໃນ

ຜູ້ຄວບຄຸມລະບົບຍ່ອຍ ຕ້ອງມີລະບົບການຄວບຄຸມພາຍໃນຂອງຕົນ ຢ່າງເປັນລາຍລັກອັກສອນ ດັ່ງນີ້:

1. ໂຄງປະກອບການຈັດຕັ້ງ ທີ່ມີລະບົບການກວດສອບ, ຖ່ວງດຸນອຳນາດຕາມຫຼັກການຄຸ້ມຄອງບໍລິຫານ ແລະ ມີການແບ່ງຄວາມຮັບຜິດຊອບຂອງໜ່ວຍງານທີ່ກ່ຽວຂ້ອງຢ່າງຈະແຈ້ງ ເພື່ອຮອງຮັບໃຫ້ແກ່ການຄຸ້ມຄອງ, ບໍລິຫານ, ຄວບຄຸມ, ລາຍງານ ແລະ ກວດສອບ ການດຳເນີນທຸລະກິດ;
2. ກົນໄກການຄວບຄຸມພາຍໃນ ເປັນຕົ້ນ ການກວດສອບລາຍການຜິດປົກກະຕິ ເພື່ອປ້ອງກັນຄວາມສ່ຽງຈາກຄວາມຜິດພາດ, ການສໍ້ໂກງໃນການປະຕິບັດໜ້າທີ່, ການບໍລິຫານຄວາມສ່ຽງທີ່ບໍ່ເໝາະສົມ ແລະບໍ່ຮັດກຸມພຽງພໍ, ການບໍ່ປະຕິບັດກົດລະບຽບການບໍລິຫານພາຍໃນຂອງຕົນ ຫຼື ກົດໝາຍທີ່ກ່ຽວຂ້ອງ;
3. ການແຕ່ງຕັ້ງພະນັກງານຮັບຜິດຊອບ ຫຼື ໜ່ວຍງານທີ່ປະຕິບັດໜ້າທີ່ຕິດຕາມກວດກາ ທີ່ມີຄວາມຮູ້, ປະສົບການ ແລະ ມີຄວາມເປັນເອກະລາດ ຈາກໜ່ວຍງານທີ່ປະຕິບັດໜ້າທີ່ຄວບຄຸມພາຍໃນ ແລະ ບໍລິຫານຄວາມສ່ຽງ ເພື່ອ:
   - ຕິດຕາມກວດກາການດຳເນີນງານຂອງຜູ້ຄວບຄຸມລະບົບຍ່ອຍ ໃຫ້ສອດຄ່ອງກັບກົດໝາຍ ແລະ ລະບຽບການກ່ຽວຂ້ອງ;
   - ດຳເນີນການກວດສອບພາຍໃນ ແລະ ການບໍລິຫານຄວາມສ່ຽງ ຢ່າງໜ້ອຍໜຶ່ງຄັ້ງ ຕໍ່ປີ ໂດຍເລີ່ມຈັດຕັ້ງປະຕິບັດໃນປີຖັດໄປ ນັບແຕ່ປີທີ່ໄດ້ຮັບອະນຸຍາດ. ພາຍຫຼັງສຳເລັດການກວດສອບແຕ່ລະຄັ້ງ ໃຫ້ລາຍງານຜົນການກວດສອບ ໂດຍຜ່ານການຮັບຮອງຈາກຜູ້ບໍລິຫານ ຕໍ່ກົມຄຸ້ມຄອງລະບົບຊຳລະສະສາງ ຜ່ານທາງເອເລັກໂຕຣນິກ ຫຼື ເປັນລາຍລັກອັກສອນ ພາຍໃນ ສີ່ສິບຫ້າ ວັນ ນັບແຕ່ວັນທີ່ສຳເລັດການກວດສອບ ເປັນຕົ້ນໄປ. ກໍລະນີເຫັນວ່າ ຜົນການກວດສອບດັ່ງກ່າວ ມີຂໍ້ມູນບໍ່ຄົບຖ້ວນ, ມີຄວາມຄຸມເຄືອ ຫຼື ກໍລະນີຈຳເປັນ ກົມຄຸ້ມຄອງລະບົບຊຳລະສະສາງ ສາມາດສະເໜີໃຫ້ຜູ້ຄວບຄຸມລະບົບຍ່ອຍ ແຕ່ງຕັ້ງຜູ້ກວດສອບພາຍນອກ ດຳເນີນການກວດສອບ ແລະ ລາຍງານຜົນການກວດສອບ ໃຫ້ກົມຄຸ້ມຄອງລະບົບຊຳລະສະສາງ ໂດຍຜູ້ຄວບຄຸມລະບົບຍ່ອຍ ຕ້ອງຮັບຜິດຊອບຄ່າໃຊ້ຈ່າຍ.

**ມາດຕາ 23 ການປ່ຽນແປງອຳນາດໃນການຄວບຄຸມກິດຈະການ**

ຜູ້ຖືຮຸ້ນໃດໜຶ່ງ ມີຈຸດປະສົງຂາຍ ຫຼື ໂອນ ຮຸ້ນທີ່ມີສິດອອກສຽງຂອງຕົນ ຊຶ່ງເຮັດໃຫ້ມີການປ່ຽນແປງ ອຳນາດ ຫຼື ເຮັດໃຫ້ມີບຸກຄົນໃດໜຶ່ງ ມີສິດອອກສຽງ ຫຼາຍກວ່າ ຫ້າສິບສ່ວນຮ້ອຍ ຂອງຈຳນວນຮຸ້ນທັງໝົດທີ່ ມີສິດອອກສຽງ ຜູ້ຄວບຄຸມລະບົບຍ່ອຍ ຕ້ອງປະຕິບັດ ດັ່ງນີ້:

1. ກໍລະນີ ເປັນນິຕິບຸກຄົນລາວ ຕ້ອງສະເໜີຂໍຄຳເຫັນຈາກກົມຄຸ້ມຄອງລະບົບຊຳລະສະສາງ ຜ່ານທາງເອເລັກໂຕຣນິກ ຫຼື ເປັນລາຍລັກອັກສອນ ພ້ອມທັງຊີ້ແຈງລາຍລະອຽດການດຳເນີນການ, ປະເມີນຜົນກະທົບ ແລະ ຄວາມສ່ຽງທີ່ອາດເກີດຂຶ້ນ ຕໍ່ການດຳເນີນທຸລະກິດ ແລະ ການໃຫ້ບໍລິການລະບົບ. ກົມຄຸ້ມຄອງລະບົບຊຳລະສະສາງ ຈະພິຈາລະນາເຫັນດີ ຫຼື ປະຕິເສດ ຫຼື ເຫັນດີໂດຍມີເງື່ອນໄຂພາຍໃນ ສາມສິບ ວັນ ນັບແຕ່ວັນທີ່ໄດ້ຮັບຄຳຮ້ອງ ແລະ ເອກະສານປະກອບຖືກຕ້ອງ ແລະ ຄົບຖ້ວນ ເປັນຕົ້ນໄປ. ກໍລະນີ ຜູ້ຄວບຄຸມລະບົບຍ່ອຍ ດຳເນີນງານບໍ່ເປັນໄປຕາມຄວາມຈິງ ຫຼື ບໍ່ປະຕິບັດຕາມເງື່ອນໄຂ ຈະຖືກສັ່ງໂຈະຊົ່ວຄາວ ຫຼື ຍົກເລີກການຕົກລົງເຫັນດີດັ່ງກ່າວ ຕາມພາຍຫຼັງ;
2. ກໍລະນີ ເປັນນິຕິບຸກຄົນຕ່າງປະເທດ ໃຫ້ແຈ້ງ ຕໍ່ກົມຄຸ້ມຄອງລະບົບຊຳລະສະສາງ ຊາບ ຜ່ານທາງເອເລັກໂຕຣນິກ ຫຼື ເປັນລາຍລັກອັກສອນ ພາຍໃນ ເຈັດ ວັນ ນັບແຕ່ວັນທີ່ມີການປ່ຽນແປງ ພ້ອມທັງຊີ້ແຈງລາຍລະອຽດການດຳເນີນການ, ປະເມີນຜົນກະທົບ ແລະ ຄວາມສ່ຽງທີ່ອາດເກີດຂຶ້ນ ຕໍ່ການດຳເນີນທຸລະກິດ ແລະ ການໃຫ້ບໍລິການ.

**ມາດຕາ 24 ການບໍລິຫານຄວາມສ່ຽງ ແລະ ຄວາມປອດໄພ**

ຜູ້ຄວບຄຸມລະບົບຍ່ອຍ ຕ້ອງບໍລິຫານຄວາມສ່ຽງ ໃນການດຳເນີນທຸລະກິດ ໃຫ້ສອດຄ່ອງກັບຮູບແບບຂະໜາດ, ປະລິມານທຸລະກຳ ແລະ ຄວາມສະຫຼັບຊັບຊ້ອນຂອງລະບົບທີ່ຕົນໃຫ້ບໍລິການ ຢ່າງເປັນລາຍລັກອັກສອນ ໂດຍຜ່ານການຮັບຮອງຈາກຜູ້ບໍລິຫານ ເພື່ອສ້າງຄວາມເຊື່ອໝັ້ນໃຫ້ແກ່ສະມາຊິກ ແລະ ມວນຊົນ ຊຶ່ງປະຕິບັດ ດັ່ງນີ້:

1. ການກຳນົດນະໂຍບາຍ ແລະ ມາດຕະການບໍລິຫານຄວາມສ່ຽງ;
2. ການໃຊ້ບໍລິການຈາກຜູ້ໃຫ້ບໍລິການພາຍນອກ;
3. ການປ່ຽນແປງການດຳເນີນທຸລະກິດ;
4. ການຢຸດໃຫ້ບໍລິການຊົ່ວຄາວ ຫຼື ເກີດເຫດຂັດຂ້ອງໃນການໃຫ້ບໍລິການລະບົບ;
5. ການລາຍງານ ແລະ ການສົ່ງລາຍງານຖານະການເງິນ;
6. ການຮັກສາຄວາມປອດໄພທາງດ້ານເຕັກໂນໂລຊີຂໍ້ມູນຂ່າວສານ.

**ມາດຕາ 25 ການກຳນົດນະໂຍບາຍ ແລະ ມາດຕະການບໍລິຫານຄວາມສ່ຽງ**

ຜູ້ຄວບຄຸມລະບົບຍ່ອຍ ຕ້ອງມີລະບົບການບໍລິຫານຄວາມສ່ຽງ ທີ່ກ່ຽວຂ້ອງກັບການໃຫ້ບໍລິການລະບົບ ຢ່າງເໝາະສົມກັບຄວາມສ່ຽງທີ່ອາດຈະເກີດຂຶ້ນ ຢ່າງເປັນລາຍລັກອັກສອນ ໂດຍປະຕິບັດ ດັ່ງນີ້:

1. ກຳນົດນະໂຍບາຍ ແລະ ມາດຕະການ ຢ່າງເປັນລາຍລັກອັກສອນ ກ່ຽວກັບການບໍລິຫານຄວາມສ່ຽງຕົ້ນຕໍ, ການກຳນົດລະດັບຄວາມສ່ຽງທີ່ຍອມຮັບໄດ້ (Risk Appetite) ແລະ ການບໍລິຫານຄວາມສ່ຽງທີ່ເກີດຈາກລະບົບ, ສະມາຊິກ ແລະ ລະບົບທີ່ມີຄວາມເຊື່ອມໂຍງກັນ (Interdependencies);

2. ກຳນົດຂະບວນການບໍລິຫານຄວາມສ່ຽງ ເປັນຕົ້ນ ການກຳນົດເຫດການຄວາມສ່ຽງ, ການປະເມີນຄວາມສ່ຽງ ແລະ ການຈັດການຄວາມສ່ຽງ ເພື່ອຄວບຄຸມ ຫຼື ຫຼຸດຄວາມສ່ຽງທີ່ອາດເກີດຂຶ້ນ ພ້ອມທັງແຕ່ງຕັ້ງຜູ້ຮັບຜິດຊອບໃນການບໍລິຫານຄວາມສ່ຽງ ໂດຍຕ້ອງລາຍງານຜົນການຕິດຕາມຄວາມສ່ຽງ ແລະ ສະພາບຄວາມສ່ຽງ ໃນແຕ່ລະໄລຍະໃຫ້ຜູ້ບໍລິຫານຊາບ;
3. ກຳນົດນະໂຍບາຍ ກ່ຽວກັບການບໍລິຫານຄວາມຕໍ່ເນື່ອງທາງທຸລະກິດ (BCM) ໂດຍມີການວິເຄາະ ແລະ ປະເມີນຜົນກະທົບຕໍ່ການຢຸດການໃຫ້ບໍລິການລະບົບ ແລະ ແຜນຮອງຮັບຄວາມຕໍ່ເນື່ອງຂອງການດຳເນີນທຸລະກິດ (BCP);
4. ທົບທວນ ແລະ ທົດລອງ ການຈັດຕັ້ງປະຕິບັດຕາມແຜນຮອງຮັບຄວາມຕໍ່ເນື່ອງຂອງການດຳເນີນທຸລະກິດ (BCP) ຮ່ວມກັບ ສະມາຊິກ ແລະ ຜູ້ທີ່ກ່ຽວຂ້ອງ ຢ່າງໜ້ອຍ ໜຶ່ງ ຄັ້ງ ຕໍ່ປີ ແລະ ທຸກຄັ້ງທີ່ມີການປ່ຽນແປງລະບົບທີ່ສຳຄັນ.

**ມາດຕາ 26 ການໃຊ້ບໍລິການຈາກ ຜູ້ໃຫ້ບໍລິການພາຍນອກ (Outsourcing)**

ຜູ້ຄວບຄຸມລະບົບຍ່ອຍ ສາມາດໃຊ້ບໍລິການຈາກ ຜູ້ໃຫ້ບໍລິການພາຍນອກ ເພື່ອຊ່ວຍໃນການດຳເນີນການແທນໃນການບໍລິຫານຈັດການ ລະບົບເຕັກໂນໂລຊີຂໍ້ມູນຂ່າວສານ ສ່ວນໃດສ່ວນໜຶ່ງຂອງຕົນ. ການໃຊ້ບໍລິການຈາກ ຜູ້ໃຫ້ບໍລິການພາຍນອກ ຜູ້ຄວບຄຸມລະບົບຍ່ອຍ ຍັງມີຄວາມຮັບຜິດຊອບຕໍ່ສະມາຊິກ ໃນການໃຫ້ບໍລິການທີ່ຕໍ່ເນື່ອງ, ປອດໄພ, ໜ້າເຊື່ອຖື ແລະ ຄວາມເສຍຫາຍ ອື່ນໆ ທີ່ອາດເກີດຂຶ້ນຄືກັນກັບຕົນເອງເປັນຜູ້ໃຫ້ບໍລິການລະບົບ.

ຜູ້ຄວບຄຸມລະບົບຍ່ອຍ ທີ່ໃຊ້ບໍລິການຈາກຜູ້ໃຫ້ບໍລິການພາຍນອກ (Outsourcing) ຕ້ອງປະຕິບັດດັ່ງນີ້:

1. ມີລະບຽບການຄັດເລືອກ, ຕິດຕາມ, ປະເມີນຜົນ ແລະ ກວດສອບ ການໃຫ້ບໍລິການຂອງຜູ້ໃຫ້ບໍລິການພາຍນອກ ຢ່າງເໝາະສົມ ໂດຍປະເມີນຄວາມສ່ຽງຂອງການໃຊ້ບໍລິການ ຢ່າງສະໝ່ຳສະເໝີ ພ້ອມທັງການປະເມີນຄວາມສ່ຽງ ກ່ຽວຂ້ອງກັບການຮັກສາຄວາມລັບ, ການຄຸ້ມຄອງຂໍ້ມູນສ່ວນບຸກຄົນ (Data Privacy) ແລະ ຜົນກະທົບຕໍ່ລະບົບຂອງຜູ້ຄວບຄຸມລະບົບຍ່ອຍ;
2. ມີສັນຍາການໃຊ້ບໍລິການ ຊຶ່ງກຳນົດສິດ ແລະ ໜ້າທີ່ຂອງຜູ້ກວດກາພາຍໃນ, ຜູ້ກວດກາພາຍນອກ ແລະ ກົມຄຸ້ມຄອງລະບົບຊຳລະສະສາງ ໃນການເຂົ້າກວດກາການດຳເນີນງານ ແລະ ການຄວບຄຸມພາຍໃນ ຂອງຜູ້ໃຫ້ບໍລິການພາຍນອກ ໃນສ່ວນທີ່ກ່ຽວຂ້ອງກັບການໃຫ້ບໍລິການລະບົບ;
3. ມີແຜນຮອງຮັບຄວາມຕໍ່ເນື່ອງຂອງການດຳເນີນທຸລະກິດ (BCP) ຫຼື ແຜນສຸກເສີນດ້ານເຕັກໂນໂລຊີຂໍ້ມູນຂ່າວສານ (Disaster Recovery Plan: DRP) ກ່ຽວກັບການໃຊ້ບໍລິການຈາກຜູ້ໃຫ້ບໍລິການພາຍນອກ ພ້ອມທັງການທົດລອງ ແລະ ທົບທວນການຈັດຕັ້ງປະຕິບັດຕາມແຜນຢ່າງເປັນປົກກະຕິ ເພື່ອໃຫ້ສາມາດຈັດຕັ້ງປະຕິບັດຕາມແຜນດັ່ງກ່າວໄດ້;
4. ກໍລະນີ ມີການເລືອກໃຊ້ບໍລິການຈາກຜູ້ໃຫ້ບໍລິການພາຍນອກ ຈາກຕ່າງປະເທດ ໂດຍສະເພາະການຈັດເກັບຂໍ້ມູນ, ການປະມວນຜົນ ຫຼື ການດຳເນີນການໃດໜຶ່ງ ກ່ຽວຂ້ອງກັບຂໍ້ມູນ ຜູ້ຄວບຄຸມລະບົບຍ່ອຍ ຕ້ອງມີການປະເມີນຄວາມສ່ຽງທີ່ອາດເກີດຂຶ້ນ ເປັນຕົ້ນ ຄວາມສ່ຽງໃນການບໍ່ສາມາດເຂົ້າເຖິງຂໍ້ມູນອັນເນື່ອງມາຈາກຄວາມຂັດຂ້ອງ ຫຼື ການປິດກັ້ນເຄືອຂ່າຍສື່ສານ ຫຼື ລະບົບສື່ສານລະຫວ່າງປະເທດ (Information Access Risk) ແລະ ຄວາມສ່ຽງດ້ານກົດໝາຍທີ່ກ່ຽວຂ້ອງກັບການປະຕິບັດຕາມຫຼັກການຂອງຕ່າງປະເທດ (Cross Border Compliance) ແລະ ແຜນຮອງຮັບຄວາມສ່ຽງທີ່ອາດເກີດຂຶ້ນດັ່ງກ່າວ.

## ມາດຕາ 27 ການປ່ຽນແປງການດຳເນີນທຸລະກິດ

ຜູ້ຄວບຄຸມລະບົບຍ່ອຍ ທີ່ມີຈຸດປະສົງປ່ຽນແປງການດຳເນີນທຸລະກິດ ທີ່ນອກເໜືອຈາກໄດ້ຮັບອະນຸຍາດ ຕ້ອງປະຕິບັດ ດັ່ງນີ້:

1. ການເພີ່ມບໍລິການໃໝ່, ການຍົກເລີກບໍລິການເກົ່າ ຫຼື ການຍົກຍ້າຍສຳນັກງານໃຫຍ່ ແມ່ນໃຫ້ຍື່ນຂໍອະນຸຍາດ ໂດຍຄັດຕິດຂໍ້ມູນ ແລະ ເອກະສານປະກອບ ຜ່ານທາງເອເລັກໂຕຣນິກ ຫຼື ເປັນລາຍລັກອັກສອນ ຕໍ່ກົມຄຸ້ມຄອງລະບົບຊຳລະສະສາງ ກ່ອນເລີ່ມດຳເນີນການ. ກົມຄຸ້ມຄອງລະບົບຊຳລະສະສາງ ຈະພິຈາລະນາເຫັນດີ ຫຼື ປະຕິເສດ ຫຼື ເຫັນດີໂດຍມີເງື່ອນໄຂ ພາຍໃນ ສາມສິບ ວັນ ນັບແຕ່ວັນທີ່ໄດ້ຮັບຄຳຮ້ອງ ແລະ ເອກະສານປະກອບ ຖືກຕ້ອງ ແລະ ຄົບຖ້ວນເປັນຕົ້ນໄປ. ກໍລະນີ ຜູ້ຄວບຄຸມລະບົບຍ່ອຍເຄື່ອນໄຫວບໍ່ເປັນໄປຕາມຄວາມຈິງ ຫຼື ບໍ່ປະຕິບັດຕາມເງື່ອນໄຂ ຈະຖືກສັ່ງໂຈະຊົ່ວຄາວ ຫຼື ຍົກເລີກການຕົກລົງເຫັນດີດັ່ງກ່າວ ຕາມພາຍຫຼັງ;
2. ການປ່ຽນແປງຮູບແບບການໃຫ້ບໍລິການລະບົບ ແລະ ການປ່ຽນແປງລະບົບເຕັກໂນໂລຊີຂໍ້ມູນຂ່າວສານ ໃຫ້ແຈ້ງຜ່ານທາງເອເລັກໂຕຣນິກ ຫຼື ເປັນລາຍລັກອັກສອນ ຕໍ່ກົມຄຸ້ມຄອງລະບົບຊຳລະສະສາງ ຄື:
   - 2.1. ການປ່ຽນແປງຮູບແບບການໃຫ້ບໍລິການລະບົບ ຊຶ່ງແຕກຕ່າງຈາກທີ່ໄດ້ຮັບອະນຸຍາດ ຢ່າງໜ້ອຍ ສິບຫ້າ ວັນ ກ່ອນເລີ່ມດຳເນີນການ ໂດຍຄັດຕິດຂໍ້ມູນລາຍລະອຽດຂອງການປ່ຽນແປງຮູບແບບການໃຫ້ບໍລິການດັ່ງກ່າວ ພ້ອມທັງປະເມີນຜົນກະທົບດ້ານລະບົບເຕັກໂນໂລຊີຂໍ້ມູນຂ່າວສານ;
   - 2.2. ການປ່ຽນແປງລະບົບເຕັກໂນໂລຊີຂໍ້ມູນຂ່າວສານທີ່ສຳຄັນ ຫຼື ມີຜົນກະທົບຕໍ່ການຮັກສາຄວາມໝັ້ນຄົງປອດໄພຂອງລະບົບທີ່ໃຫ້ບໍລິການ ຈາກທີ່ເຄີຍໄດ້ແຈ້ງໄວ້ກັບກົມຄຸ້ມຄອງລະບົບຊຳລະສະສາງ ຫຼື ໄດ້ຮັບອະນຸຍາດ ຢ່າງໜ້ອຍ ສິບຫ້າ ວັນ ໂດຍຄັດຕິດຂໍ້ມູນລາຍລະອຽດແຜນພາບຂອງລະບົບ, ສ່ວນທີ່ມີການປ່ຽນແປງທີ່ສຳຄັນ ແລະ ການປະເມີນຜົນກະທົບດ້ານລະບົບເຕັກໂນໂລຊີຂໍ້ມູນຂ່າວສານ;
   - 2.3. ການປ່ຽນແປງຊື່ຂອງຜູ້ຄວບຄຸມລະບົບຍ່ອຍ ຢ່າງໜ້ອຍ ເຈັດ ວັນ ກ່ອນການປ່ຽນແປງ.

## ມາດຕາ 28 ການຢຸດໃຫ້ບໍລິການຊົ່ວຄາວ ຫຼື ເກີດບັນຫາ ຫຼື ຄວາມບົກຜ່ອງໃນການໃຫ້ບໍລິການລະບົບ

ຜູ້ຄວບຄຸມລະບົບຍ່ອຍ ທີ່ມີການຢຸດໃຫ້ບໍລິການຊົ່ວຄາວ ຫຼື ເກີດບັນຫາ ຫຼື ຄວາມບົກຜ່ອງໃນການໃຫ້ບໍລິການລະບົບ ຕ້ອງປະຕິບັດ ດັ່ງນີ້:

1. ການຢຸດໃຫ້ບໍລິການຊົ່ວຄາວ ທີ່ມີການກະກຽມໄວ້ລ່ວງໜ້າ ເປັນຕົ້ນ ການປົດປັບປຸງລະບົບທີ່ສຳຄັນ ທີ່ສົ່ງຜົນກະທົບໃນວົງກວ້າງ ຄື:
   - 1.1. ແຈ້ງກົມຄຸ້ມຄອງລະບົບຊຳລະສະສາງ ຜ່ານທາງເອເລັກໂຕຣນິກ ຫຼື ເປັນລາຍລັກອັກສອນ ຢ່າງໜ້ອຍ ສິບຫ້າ ວັນ ກ່ອນເລີ່ມດຳເນີນການ;
   - 1.2. ແຈ້ງໃຫ້ສະມາຊິກ ຜ່ານທາງເອເລັກໂຕຣນິກ, ເປັນລາຍລັກອັກສອນ ແລະ ພາຫະນະສື່ມວນຊົນ ທີ່ເຮັດໃຫ້ສະມາຊິກສາມາດຮັບຮູ້ໄດ້ ຢ່າງໜ້ອຍ ເຈັດ ວັນ ກ່ອນເລີ່ມດຳເນີນການ;
2. ຢຸດໃຫ້ບໍລິການຊົ່ວຄາວ ຊຶ່ງສົ່ງຜົນກະທົບໃນວົງກວ້າງ ທີ່ບໍ່ມີການກະກຽມໄວ້ລ່ວງໜ້າ ຫຼື ກໍລະນີ ທີ່ເກີດຄວາມບົກຜ່ອງ ໃນການໃຫ້ບໍລິການລະບົບ ຊຶ່ງເປັນເຫດການທີ່ສຳຄັນໃນການໃຊ້ເຕັກໂນໂລຊີຂໍ້ມູນຂ່າວສານ ແລະ ສົ່ງຜົນກະທົບຕໍ່ການໃຫ້ບໍລິການລະບົບ, ລະບົບການດຳເນີນງານ ຫຼື ຊື່ສຽງຂອງຜູ້ຄວບຄຸມລະບົບຍ່ອຍ ລວມເຖິງກໍລະນີເຕັກໂນໂລຊີຂໍ້ມູນຂ່າວສານ ຖືກໂຈມຕີ

ທາງໄຊເບີ (Cyber) ແລະ ເປັນບັນຫາ ຫຼື ເຫດການ ທີ່ຜູ້ຄວບຄຸມລະບົບຍ່ອຍ ຕ້ອງລາຍງານຕໍ່ຜູ້ບໍລິຫານຕົນຊາບ ຕ້ອງປະຕິບັດ ຄື:

2.1. ແຈ້ງກົມຄຸ້ມຄອງລະບົບຊໍາລະສະສາງ ຜ່ານທາງເອເລັກໂຕຣນິກ ຫຼື ເປັນລາຍລັກອັກສອນຊາບທັນທີ ເມື່ອເກີດ ຫຼື ຮັບຮູ້ຄວາມບົກຜ່ອງໃນການໃຫ້ບໍລິການ ໂດຍແຈ້ງສາເຫດ ແລະ ການແກ້ໄຂບັນຫາເພີ່ມຕື່ມພາຍຫຼັງ;

2.2. ແຈ້ງສະມາຊິກ ຜ່ານທາງເອເລັກໂຕຣນິກ ຫຼື ເປັນລາຍລັກອັກສອນ ແລະ ພາຫະນະສື່ມວນຊົນ ທີ່ສະມາຊິກສາມາດຮັບຮູ້ໄດ້ຢ່າງໄວ ນັບແຕ່ເວລາທີ່ເກີດ, ຮັບຮູ້ຄວາມບົກຜ່ອງ ໃນການໃຫ້ບໍລິການລະບົບ ໂດຍແຈ້ງສາເຫດ ແລະ ການແກ້ໄຂບັນຫາເພີ່ມຕື່ມພາຍຫຼັງ.

**ມາດຕາ 29 ການຮັກສາຄວາມປອດໄພດ້ານລະບົບເຕັກໂນໂລຊີຂໍ້ມູນຂ່າວສານ**

ຜູ້ຄວບຄຸມລະບົບຍ່ອຍ ຕ້ອງປະຕິບັດຕາມ ລະບຽບການຮັກສາຄວາມປອດໄພທາງດ້ານເຕັກໂນໂລຊີຂໍ້ມູນຂ່າວສານ ຂອງທະນາຄານແຫ່ງ ສປປ ລາວ ແລະ ຕ້ອງມີການກວດສອບຄວາມໝັ້ນຄົງປອດໄພ ທາງດ້ານລະບົບເຕັກໂນໂລຊີຂໍ້ມູນຂ່າວສານ ໂດຍຜູ້ກວດສອບພາຍນອກ ທີ່ມີຄວາມຮູ້, ຄວາມສາມາດ, ປະສົບການ ແລະ ເປັນອິດສະຫຼະ ເພື່ອດໍາເນີນການກວດສອບ, ປະເມີນຄວາມສ່ຽງດ້ານເຕັກໂນໂລຊີຂໍ້ມູນຂ່າວສານ ແລະ ທົດສອບເຈາະລະບົບ (Penetration Test). ພາຍຫຼັງສໍາເລັດ ການກວດສອບ, ການປະເມີນຄວາມສ່ຽງ ແລະ ທົດສອບເຈາະລະບົບ ທຸກໆຄັ້ງ ໃຫ້ລາຍງານຜົນ ຕໍ່ກົມຄຸ້ມຄອງລະບົບຊໍາລະສະສາງ ຜ່ານທາງເອເລັກໂຕຣນິກ ຫຼື ເປັນລາຍລັກອັກສອນ ພາຍໃນ ສີ່ສິບຫ້າ ວັນ ນັບແຕ່ວັນທີ່ສໍາເລັດການກວດສອບ ເປັນຕົ້ນໄປ.

**ມາດຕາ 30 ການປົກປ້ອງສະມາຊິກ**

ຜູ້ຄວບຄຸມລະບົບຍ່ອຍ ດໍາເນີນການປົກປ້ອງສະມາຊິກຂອງຕົນ ດ້ວຍວິທີການ ດັ່ງນີ້:

1. ການກໍານົດລະບຽບການໃຫ້ບໍລິການ;
2. ການເກັບຮັກສາຂໍ້ມູນສ່ວນຕົວຂອງສະມາຊິກ;
3. ການເປີດເຜີຍຄ່າທໍານຽມ;
4. ການແກ້ໄຂຂໍ້ຂັດແຍ່ງ.

**ມາດຕາ 31 ການກໍານົດລະບຽບການໃຫ້ບໍລິການ**

ຜູ້ຄວບຄຸມລະບົບຍ່ອຍ ຕ້ອງກໍານົດລະບຽບການໃຫ້ບໍລິການ ແລະ ຄຸ້ມຄອງສະມາຊິກ ຢ່າງເປັນລາຍລັກອັກສອນ ແລະ ເປີດເຜີຍລະບຽບການດັ່ງກ່າວ ໃຫ້ສະມາຊິກຂອງຕົນຊາບ. ລະບຽບການໃຫ້ບໍລິການມີເນື້ອໃນຕົ້ນຕໍ ດັ່ງນີ້:

1. ເງື່ອນໄຂ ແລະ ຂັ້ນຕອນ ສໍາລັບການສະເໜີເຂົ້າໃຊ້ບໍລິການ, ການໂຈະ, ການຖອນ ຫຼື ຮັບເຂົ້າໃຊ້ບໍລິການຄືນໃໝ່;
2. ສິດ ແລະ ພັນທະ ຂອງສະມາຊິກ;
3. ການນໍາໃຊ້ລະບົບ;
4. ມາດຕະການບໍລິຫານຄວາມສ່ຽງດ້ານການເງິນ (Financial Risk).

ກໍລະນີ ມີການປັບປຸງແປງລະບຽບການໃຫ້ບໍລິການ ຜູ້ຄວບຄຸມລະບົບຍ່ອຍ ຕ້ອງແຈ້ງໃຫ້ສະມາຊິກຂອງຕົນ ຜ່ານທາງເອເລັກໂຕຣນິກ ຫຼື ແຈ້ງເປັນລາຍລັກອັກສອນ ຢ່າງໜ້ອຍ ສາມສິບ ວັນ ກ່ອນມີຜົນບັງຄັບໃຊ້.

**ມາດຕາ 32 ການເກັບຮັກສາຂໍ້ມູນສ່ວນຕົວຂອງສະມາຊິກ**

ຜູ້ຄວບຄຸມລະບົບຍ່ອຍ ຕ້ອງກຳນົດລະບຽບການເກັບຮັກສາຂໍ້ມູນສ່ວນຕົວຂອງສະມາຊິກ ໄວ້ຢ່າງເປັນລາຍລັກອັກສອນ ກ່ຽວກັບການກຳນົດຊັ້ນຄວາມລັບໃນການເຂົ້າເຖິງຂໍ້ມູນ ແລະ ການລະບຸຕົວບຸກຄົນທີ່ມີສິດເຂົ້າເຖິງຂໍ້ມູນດັ່ງກ່າວ ພ້ອມທັງໃຫ້ມີລະບົບການຈັດເກັບຂໍ້ມູນ ທີ່ຖືກຕ້ອງເຊື່ອຖືໄດ້ ແລະ ປ້ອງກັນຜູ້ທີ່ບໍ່ມີໜ້າທີ່ກ່ຽວຂ້ອງເຂົ້າເຖິງ ຫຼື ແກ້ໄຂຂໍ້ມູນທີ່ເກັບຮັກສາ.

ຜູ້ຄວບຄຸມລະບົບຍ່ອຍ ຕ້ອງເກັບຮັກສາຄວາມລັບຂໍ້ມູນສ່ວນຕົວຂອງສະມາຊິກ ໂດຍບໍ່ເປີດເຜີຍຂໍ້ມູນເຫຼົ່ານັ້ນຂອງສະມາຊິກ ຕະຫຼອດໄລຍະເວລາການໃຊ້ບໍລິການ ແລະ ພາຍຫຼັງທີ່ຢຸດໃຊ້ບໍລິການແລ້ວ ຍົກເວັ້ນກໍລະນີໃດໜຶ່ງ ດັ່ງນີ້:

1. ການເປີດເຜີຍໂດຍໄດ້ຮັບການເຫັນດີຈາກສະມາຊິກ ຜ່ານທາງເອເລັກໂຕຣນິກ ຫຼື ເປັນລາຍລັກອັກສອນ;
2. ການເປີດເຜີຍເພື່ອປະໂຫຍດແກ່ການສືບສວນ-ສອບສວນ ຫຼື ການດຳເນີນຄະດີ;
3. ການເປີດເຜີຍແກ່ຜູ້ກວດສອບບັນຊີ ຂອງຜູ້ຄວບຄຸມລະບົບຍ່ອຍ;
4. ການເປີດເຜີຍເພື່ອປະໂຫຍດໃນການກຳນົດນະໂຍບາຍ ແລະ ຄຸ້ມຄອງລະບົບການຊຳລະ ຂອງທະນາຄານແຫ່ງ ສປປ ລາວ;
5. ການເປີດເຜີຍເພື່ອປະໂຫຍດໃນການປະຕິບັດຕາມກົດໝາຍ.

**ມາດຕາ 33 ການເປີດເຜີຍຄ່າທຳນຽມ**

ຜູ້ຄວບຄຸມລະບົບຍ່ອຍ ຕ້ອງເປີດເຜີຍລາຍລະອຽດຄ່າທຳນຽມການໃຫ້ບໍລິການລະບົບ ໃຫ້ແກ່ກົມຄຸ້ມຄອງລະບົບຊຳລະສະສາງ ແລະ ສະມາຊິກ ຜ່ານທາງເອເລັກໂຕຣນິກ, ເປັນລາຍລັກອັກສອນ ຫຼື ພາຫະນະສື່ມວນຊົນ. ກໍລະນີມີການປ່ຽນແປງຄ່າທຳນຽມການໃຫ້ບໍລິການລະບົບ ຜູ້ຄວບຄຸມລະບົບຍ່ອຍ ຕ້ອງແຈ້ງໃຫ້ກົມຄຸ້ມຄອງລະບົບຊຳລະສະສາງ ແລະ ສະມາຊິກຊາບ ຢ່າງໜ້ອຍ ສາມສິບ ວັນ ກ່ອນມີຜົນບັງຄັບໃຊ້.

**ມາດຕາ 34 ການແກ້ໄຂຂໍ້ຂັດແຍ່ງ.**

ຜູ້ຄວບຄຸມລະບົບຍ່ອຍ ຕ້ອງມີລະບຽບການແກ້ໄຂຂໍ້ຂັດແຍ່ງ ຢ່າງເປັນລາຍລັກອັກສອນ ດັ່ງນີ້:

1. ກຳນົດຊ່ອງທາງ ໃນການຮັບຄຳຮ້ອງທຸກ ຫຼື ຂໍ້ໂຕ້ແຍ່ງຈາກສະມາຊິກ ເປັນຕົ້ນ ໝາຍເລກໂທລະສັບ, ທີ່ຢູ່ຂອງສຳນັກງານ ຫຼື ຈົດໝາຍເອເລັກໂຕຣນິກ ທີ່ສາມາດຕິດຕໍ່ໄດ້;
2. ກຳນົດວິທີການ, ຂັ້ນຕອນ ແລະ ເວລາ ກ່ຽວກັບການແກ້ໄຂຂໍ້ຂັດແຍ່ງ ເພື່ອຫາຂໍ້ຍຸດຕິ ພ້ອມທັງຈັດຝຶກອົບຮົມວິທີການຈັດຕັ້ງປະຕິບັດດັ່ງກ່າວ ໃຫ້ພະນັກງານທີ່ກ່ຽວຂ້ອງ. ຜູ້ຄວບຄຸມລະບົບຍ່ອຍ ຕ້ອງດຳເນີນການກວດສອບ ແລະ ແຈ້ງຄວາມຄືບໜ້າ, ຊີ້ແຈງຂັ້ນຕອນການດຳເນີນການແກ້ໄຂຕ່າງໆ ແລະ ໄລຍະເວລາ ໃນການແກ້ໄຂຄຳຮ້ອງທຸກໃຫ້ຜູ້ຮ້ອງທຸກຊາບ ພາຍໃນ ເຈັດວັນ ນັບແຕ່ວັນທີ່ໄດ້ຮັບແຈ້ງ ກ່ຽວກັບການຮ້ອງທຸກ ຫຼື ມີຂໍ້ໂຕ້ແຍ່ງຈາກສະມາຊິກ;
3. ດຳເນີນການແກ້ໄຂຄຳຮ້ອງທຸກໃຫ້ສຳເລັດ ແລະ ແຈ້ງຜົນການດຳເນີນການໃຫ້ຜູ້ຮ້ອງທຸກຊາບໂດຍໄວ.

**ມາດຕາ 35 ການສົ່ງເສີມໃຫ້ມີການແຂ່ງຂັນ**

ຜູ້ຄວບຄຸມລະບົບຍ່ອຍ ຕ້ອງສົ່ງເສີມໃຫ້ມີການແຂ່ງຂັນໂດຍກຳນົດເປົ້າໝາຍ ແລະ ການໃຫ້ບໍລິການຢ່າງມີປະສິດທິພາບ ຢ່າງເປັນລາຍລັກອັກສອນ ດັ່ງນີ້:

1. ກຳນົດເປົ້າໝາຍໃນການໃຫ້ບໍລິການ ທີ່ສາມາດປະເມີນ ແລະ ວັດຜົນໄດ້ ເປັນຕົ້ນ ລະດັບຄວາມພ້ອມໃຊ້ງານຂອງລະບົບ (System Availability) ແລະ ການຕິດຕາມ ແລະ ປະເມີນຜົນ ພ້ອມທັງລາຍງານຜົນໃຫ້ຜູ້ບໍລິຫານຂອງຕົນຊາບ ຢ່າງສະໝໍ່າສະເໝີ ແລະ ການເປີດເຜີຍຜົນການດໍາເນີນງານ ຕາມເປົ້າໝາຍໃນການໃຫ້ບໍລິການໃຫ້ສະມາຊິກຮັບຊາບ;
2. ມີການສຳຫຼວດ ແລະ ຮັບຟັງຄວາມຄິດເຫັນຂອງສະມາຊິກ ຢ່າງສະໝໍ່າສະເໝີ ກ່ຽວກັບການໃຫ້ບໍລິການຂອງຕົນ ເພື່ອພັດທະນາ ແລະ ປັບປຸງໃຫ້ລະບົບຕອບສະໜອງຄວາມຕ້ອງການຂອງສະມາຊິກ ແລະ ທັນຕໍ່ການປ່ຽນແປງຂອງເຕັກໂນໂລຊີຂໍ້ມູນຂ່າວສານ ທີ່ເກີດຂຶ້ນຢ່າງໄວວາ ເປັນຕົ້ນ ຂອບເຂດໃນການໃຫ້ບໍລິການ, ເຄື່ອງມື (Function) ໃນການນໍາໃຊ້ລະບົບ ຫຼື ທາງເລືອກໃນການນໍາໃຊ້ເຕັກໂນໂລຊີຂໍ້ມູນຂ່າວສານ.

**ມາດຕາ 36 ການລາຍງານ**

ຜູ້ຄວບຄຸມລະບົບຍ່ອຍ ຕ້ອງສ້າງບົດລາຍງານການເງິນທີ່ສະແດງຖານະທາງການເງິນ ແລະ ຜົນການດໍາເນີນທຸລະກິດ ແລະ ສົ່ງລາຍງານດັ່ງກ່າວ ຕໍ່ກົມຄຸ້ມຄອງລະບົບຊໍາລະສະສາງ ນັບແຕ່ວັນທີ່ໄດ້ຮັບອະນຸຍາດ ດັ່ງນີ້:

1. ລາຍງານປະຈຳວັນ ພາຍໃນວັນຖັດໄປ ຜ່ານທາງເອເລັກໂຕຣນິກ;
2. ລາຍງານປະຈຳເດືອນ ພາຍໃນ ສິບ ວັນ ນັບແຕ່ວັນສິ້ນສຸດເດືອນ;
3. ລາຍງານປະຈຳໄຕມາດ ພາຍໃນ ສິບຫ້າ ວັນ ນັບແຕ່ວັນສິ້ນສຸດໄຕມາດ;
4. ລາຍງານປະຈຳຫົກເດືອນ ພາຍໃນ ສີ່ສິບຫ້າ ວັນ ນັບແຕ່ວັນສິ້ນສຸດໄຕມາດສອງ ແລະ ໄຕມາດສີ່;
5. ເອກະສານລາຍງານທາງການເງິນປະຈຳປີ ແລະ ຜ່ານຜູ້ກວດສອບບັນຊີພາຍນອກ ພາຍໃນ ເກົ້າສິບ ວັນ ນັບແຕ່ວັນສິ້ນສຸດປີການບັນຊີ;
6. ລາຍງານລາຍຊື່ຜູ້ຖືຮຸ້ນ ແລະ ອັດຕາສ່ວນການຖືຮຸ້ນ ສິບ ອັນດັບທໍາອິດ ພ້ອມດ້ວຍສັນຊາດຂອງຜູ້ຖືຮຸ້ນ ພ້ອມກັບການສົ່ງເອກະສານລາຍງານທາງການເງິນປະຈຳປີ.

## ໝວດທີ 3
## ການໂຈະ ແລະ ການຖອນໃບອະນຸຍາດ

**ມາດຕາ 37 ການໂຈະການດໍາເນີນງານຂອງຜູ້ຄວບຄຸມລະບົບຍ່ອຍ**

ກົມຄຸ້ມຄອງລະບົບຊໍາລະສະສາງ ຈະພິຈາລະນາ ໂຈະການດໍາເນີນງານຂອງຜູ້ຄວບຄຸມລະບົບຍ່ອຍ ໃນກໍລະນີໃດໜຶ່ງ ດັ່ງນີ້:

1. ໄດ້ຮັບການອະນຸຍາດບົນພື້ນຖານການສະໜອງຂໍ້ມູນທີ່ບໍ່ຖືກຕ້ອງ;
2. ຖືກດໍາເນີນຄະດີໃດໜຶ່ງ;
3. ການກວດສອບພາຍໃນ ແລະ ການບໍລິຫານຄວາມສ່ຽງ ມີຂໍ້ມູນບໍ່ຄົບຖ້ວນ ຫຼື ບໍ່ຊັດເຈນ;
4. ການຢຸດໃຫ້ບໍລິການຊົ່ວຄາວ ຫຼື ເກີດບັນຫາ, ຄວາມບົກຜ່ອງໃນການໃຫ້ບໍລິການລະບົບ;
5. ລະບົບຖືກໂຈມຕີທາງໄຊເບີ (Cyber);
6. ຕາມການສະເໜີຈາກອົງການທີ່ມີສິດອໍານາດ;
7. ລະເມີດຕາມທີ່ໄດ້ກໍານົດໄວ້ໃນ ຂໍ້ຕົກລົງສະບັບນີ້.

ກົມຄຸ້ມຄອງລະບົບຊໍາລະສະສາງ ຕ້ອງແຈ້ງກ່ຽວກັບການໂຈະການດໍາເນີນງານຂອງຜູ້ຄວບຄຸມລະບົບຍ່ອຍ ພ້ອມດ້ວຍເຫດຜົນ ແລະ ກໍານົດເວລາການແກ້ໄຂ.

ຜູ້ຄວບຄຸມລະບົບຍ່ອຍ ທີ່ຖືກໂຈະການດໍາເນີນງານ ບໍ່ສາມາດໃຫ້ບໍລິການແກ່ສະມາຊິກໄດ້ຈົນກວ່າໄດ້ຮັບການແກ້ໄຂສໍາເລັດຕາມກໍານົດເວລາ ແລະ ຮັບຮອງຈາກກົມຄຸ້ມຄອງລະບົບຊໍາລະສະສາງ ຢ່າງເປັນລາຍລັກອັກສອນ.

**ມາດຕາ 38 ການຖອນໃບອະນຸຍາດເປັນຜູ້ຄວບຄຸມລະບົບຍ່ອຍ**

ກົມຄຸ້ມຄອງລະບົບຊໍາລະສະສາງ ຈະພິຈາລະນາຖອນໃບອະນຸຍາດເປັນຜູ້ຄວບຄຸມລະບົບຍ່ອຍ ໃນກໍລະນີໃດໜຶ່ງ ດັ່ງນີ້:

1. ຂໍຍົກເລີກດ້ວຍຄວາມສະໝັກໃຈ;
2. ດໍາເນີນທຸລະກິດ ໂດຍບໍ່ປະຕິບັດຕາມແຜນ, ນະໂຍບາຍ, ມາດຕະການ ແລະ ລະບົບຕ່າງໆ ຕາມທີ່ໄດ້ຮັບອະນຸຍາດ ຈາກກົມຄຸ້ມຄອງລະບົບຊໍາລະສະສາງ;
3. ຖືກສານຕັດສິນລົ້ມລະລາຍ;
4. ບໍ່ສາມາດແກ້ໄຂ ຕາມທີ່ໄດ້ກໍານົດໄວ້ໃນ ວັກ ສອງ ມາດຕາ 37 ຂອງຂໍ້ຕົກລົງສະບັບນີ້;
5. ບໍ່ສາມາດດໍາເນີນທຸລະກິດ ໄດ້ຢ່າງເປັນປົກກະຕິ ເປັນເວລາ ສອງ ປີ;
6. ລະເມີດຂໍ້ຕົກລົງສະບັບນີ້ ແລະ ລະບຽບການອື່ນໆທີ່ກ່ຽວຂ້ອງ.

ການຖອນໃບອະນຸຍາດ ຕ້ອງປະຕິບັດພາຍຫຼັງສໍາເລັດການຊໍາລະສະສາງ ແລະ ຕ້ອງປະຕິບັດຕາມລະບຽບການ.

ກົມຄຸ້ມຄອງລະບົບຊໍາລະສະສາງ ຕ້ອງແຈ້ງການຖອນໃບອະນຸຍາດເປັນຜູ້ຄວບຄຸມລະບົບຍ່ອຍ ໃຫ້ມວນຊົນຊາບທັນທີ ຜ່ານພາຫະນະສື່ມວນຊົນ ເປັນເວລາ ສິບ ວັນ ຢ່າງຕໍ່ເນື່ອງ ນັບແຕ່ວັນທີ່ໄດ້ຖອນອະນຸຍາດເປັນຕົ້ນໄປ.

**ມາດຕາ 39 ການຊໍາລະສະສາງ**

ຜູ້ຄວບຄຸມລະບົບຍ່ອຍ ທີ່ຖືກຖອນໃບອະນຸຍາດຕາມທີ່ໄດ້ກໍານົດໄວ້ໃນມາດຕາ 38 ຂອງຂໍ້ຕົກລົງສະບັບນີ້ ຕ້ອງດໍາເນີນການຊໍາລະສະສາງຕາມທີ່ໄດ້ກໍານົດໄວ້ໃນລະບຽບການຂອງທະນາຄານແຫ່ງ ສປປ ລາວ.

## ພາກທີ IV
## ສະມາຊິກຂອງລະບົບການຊໍາລະທຸລະກໍາຍ່ອຍ

**ມາດຕາ 40 ສະມາຊິກ**

ສະມາຊິກ ແມ່ນຜູ້ທີ່ໄດ້ຮັບອະນຸຍາດໃຫ້ໃຊ້ບໍລິການລະບົບການຊໍາລະທຸລະກໍາຍ່ອຍ ແລະ ສາມາດປະຕິບັດຕາມຫຼັກການ ແລະ ເງື່ອນໄຂ ທີ່ຜູ້ຄວບຄຸມລະບົບຍ່ອຍກໍານົດ.

**ມາດຕາ 41 ການເຄື່ອນໄຫວຂອງສະມາຊິກ**

ການໃຊ້ບໍລິການໃນລະບົບການຊໍາລະທຸລະກໍາຍ່ອຍ ສະມາຊິກ ຕ້ອງປະຕິບັດຕາມຂັ້ນຕອນ, ເງື່ອນໄຂ, ສິດ ແລະພັນທະ ແລະ ລະບຽບການກ່ຽວກັບການໃຊ້ບໍລິການທີ່ຜູ້ຄວບຄຸມລະບົບຍ່ອຍວາງອອກ ທັງໄດ້ຮັບການປົກປ້ອງໃນການໃຊ້ບໍລິການ ຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

# ພາກທີ V
# ການຄຸ້ມຄອງ ແລະ ການກວດກາ
## ໝວດທີ 1
## ການຄຸ້ມຄອງວຽກງານລະບົບການຊໍາລະທຸລະກໍາຍ່ອຍ

**ມາດຕາ 42 ອົງການຄຸ້ມຄອງ**

ທະນາຄານແຫ່ງ ສປປ ລາວ ເປັນຜູ້ຄຸ້ມຄອງວຽກງານລະບົບການຊໍາລະທຸລະກໍາຍ່ອຍ ໂດຍມອບໃຫ້ກົມຄຸ້ມຄອງລະບົບຊໍາລະສະສາງ ເປັນຜູ້ຮັບຜິດຊອບໂດຍກົງ.

**ມາດຕາ 43 ສິດ ແລະ ໜ້າທີ່ຂອງກົມຄຸ້ມຄອງລະບົບຊໍາລະສະສາງ**

ກົມຄຸ້ມຄອງລະບົບຊໍາລະສະສາງ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຄຸ້ມຄອງ ແລະ ຕິດຕາມກວດກາລະບົບການຊໍາລະທຸລະກໍາຍ່ອຍ, ຜູ້ເຂົ້າຮ່ວມໃນລະບົບການຊໍາລະທຸລະກໍາຍ່ອຍ ໃນການຈັດຕັ້ງປະຕິບັດບັນດາຫຼັກການ, ມາດຕະຖານ ແລະ ລະບຽບການຕ່າງໆໃຫ້ສອດຄ່ອງຕາມລະບຽບກົດໝາຍ;
2. ຄົ້ນຄວ້າ, ສ້າງ ແລະ ປັບປຸງ ບັນດານະໂຍບາຍ, ແຜນຍຸດທະສາດ ແລະ ລະບຽບການຕ່າງໆ ທີ່ຕິດພັນກັບລະບົບການຊໍາລະທຸລະກໍາຍ່ອຍ ໃຫ້ແທດເໝາະກັບຫຼັກການສາກົນໃນແຕ່ລະໄລຍະ;
3. ຄົ້ນຄວ້າ ແລະ ພິຈາລະນາແກ້ໄຂຂໍ້ຂັດແຍ່ງຕ່າງໆ ລະຫວ່າງຜູ້ເຂົ້າຮ່ວມໃນລະບົບຊໍາລະທຸລະກໍາຍ່ອຍ;
4. ສະເໜີຜູ້ຄວບຄຸມລະບົບຍ່ອຍ ເພື່ອປັບປຸງ, ພັດທະນາ, ແກ້ໄຂບັນຫາຕ່າງໆ ກ່ຽວກັບລະບົບຊໍາລະທຸລະກໍາຍ່ອຍ ເພື່ອແນໃສ່ເຮັດໃຫ້ຮັບປະກັນຜົນສໍາເລັດໃນການປະຕິບັດວຽກງານ.
5. ກໍານົດຫຼັກການ, ເງື່ອນໄຂເພີ່ມຕື່ມ ຫຼື ຮຽກຮ້ອງຂໍ້ມູນເພີ່ມຕື່ມ ກ່ຽວກັບການຄຸ້ມຄອງລະບົບການຊໍາລະທຸລະກໍາຍ່ອຍ.

## ໝວດທີ 2
## ການກວດກາ

**ມາດຕາ 44 ອົງການກວດກາ**

ອົງການກວດກາ ແມ່ນອົງການດຽວກັນກັບອົງການຄຸ້ມຄອງ. ກົມຄຸ້ມຄອງລະບົບຊໍາລະສະສາງ ເປັນຜູ້ຕິດຕາມກວດກາ ຜູ້ຄວບຄຸມລະບົບຍ່ອຍ ໃຫ້ປະຕິບັດຕາມຫຼັກການ ແລະ ລະບຽບການທີ່ກ່ຽວຂ້ອງ ເພື່ອເຮັດໃຫ້ການເຄື່ອນໄຫວວຽກງານດັ່ງກ່າວມີຄວາມສະດວກ, ວ່ອງໄວ, ມີປະສິດທິພາບ ແລະ ສອດຄ່ອງຕາມລະບຽບກົດໝາຍທີ່ກ່ຽວຂ້ອງ.

**ມາດຕາ 45 ການກວດກາທາງດ້ານວິຊາການ**

ກົມຄຸ້ມຄອງລະບົບຊຳລະສະສາງ ເປັນຜູ້ກວດກາທາງດ້ານວິຊາການ ຕໍ່ກັບການດຳເນີນງານຂອງຜູ້ຄວບຄຸມລະບົບຍ່ອຍ. ການກວດກາທາງດ້ານວິຊາການ ໃຫ້ປະຕິບັດຕາມ ກົດໝາຍວ່າດ້ວຍລະບົບການຊຳລະ ມາດຕາ 53 ແລະ ເນື້ອໃນເພີ່ມຕື່ມ ດັ່ງນີ້:

1. ການຈັດຕັ້ງປະຕິບັດກົດໝາຍ ແລະ ລະບຽບການກ່ຽວກັບການຄວບຄຸມລະບົບ ຫຼື ການໃຫ້ບໍລິການລະບົບ;
2. ການຄວບຄຸມ, ການໃຫ້ບໍລິການລະບົບ, ການນຳໃຊ້ລະບົບ ແລະ ເຄື່ອງມືການຊຳລະ;
3. ລະບຽບພາຍໃນ ກ່ຽວກັບການໃຫ້ບໍລິການລະບົບ ເປັນຕົ້ນ ການເກັບຄ່າທຳນຽມ ແລະ ຄ່າບໍລິການອື່ນໆ ຂອງຜູ້ຄວບຄຸມລະບົບຍ່ອຍ;
4. ສະຖານທີ່, ອຸປະກອນ, ເຄື່ອງຈັກ, ລະບົບບັນທຶກບັນຊີ ຫຼື ເອກະສານຕ່າງໆ ກ່ຽວກັບບັນຊີ ຫຼື ທຸລະກຳຂອງຜູ້ຄວບຄຸມລະບົບຍ່ອຍ;
5. ສັນຍາກ່ຽວກັບການໃຊ້ບໍລິການ ຈາກຜູ້ໃຫ້ບໍລິການພາຍນອກ;
6. ການຕິດຕາມກວດກາ ການຈັດຕັ້ງປະຕິບັດຄຳແນະນຳກ່ຽວກັບວຽກງານລະບົບຊຳລະສະສາງ.

**ມາດຕາ 46 ຮູບແບບການກວດກາ**

ຮູບແບບການກວດກາ ປະກອບດ້ວຍ ສອງ ຮູບແບບ ຄື: ການກວດກາຕາມເອກະສານ ແລະ ການກວດກາກັບທີ່.

ການກວດກາຕາມເອກະສານ ແມ່ນການກວດກາບັນດາຂໍ້ມູນ ແລະ ເອກະສານຕ່າງໆ ທີ່ໄດ້ລາຍງານຕໍ່ກົມຄຸ້ມຄອງລະບົບຊຳລະສະສາງ ຢ່າງເປັນປົກກະຕິ ຫຼື ຕາມການຮຽກຮ້ອງ ໃນຮູບແບບຂອງສຳເນົາເອກະສານ ຫຼື ຜ່ານທາງເອເລັກໂຕຣນິກ ເພື່ອວິເຄາະ, ປະເມີນຄວາມສ່ຽງ ແລະ ກວດກາການຈັດຕັ້ງປະຕິບັດຕາມກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານລະບົບຊຳລະສະສາງ.

ການກວດກາກັບທີ່ ແມ່ນການລົງເກັບກຳຂໍ້ມູນ ແລະ ເອກະສານຕ່າງໆ ລວມທັງ ການສຳພາດ, ໂອ້ລົມ ແລະ ປຶກສາຫາລື.

**ມາດຕາ 47 ການເກັບຮັກສາຂໍ້ມູນ**

ຜູ້ຄວບຄຸມລະບົບຍ່ອຍ ຕ້ອງເກັບຮັກສາຂໍ້ມູນປະເພດເອກະສານ ກ່ຽວກັບການໃຫ້ບໍລິການລະບົບຂອງຕົນ ເພື່ອອຳນວຍຄວາມສະດວກໃນການກວດກາ ຫຼື ການດຳເນີນການທີ່ອາດຈະເກີດຂຶ້ນ ໂດຍຕ້ອງເກັບຮັກສາໄວ້ຢ່າງໜ້ອຍຕາມໄລຍະເວລາທີ່ກຳນົດໄວ້ໃນລະບຽບກົດໝາຍທີ່ກ່ຽວຂ້ອງ, ສຳລັບຂໍ້ມູນປະເພດເອເລັກໂຕຣນິກ ແມ່ນຕ້ອງເກັບຮັກສາໄວ້ຢ່າງໜ້ອຍ ສິບ ປີ.

## ພາກທີ VI
## ນະໂຍບາຍຕໍ່ຜູ້ທີ່ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 48 ນະໂຍບາຍຕໍ່ຜູ້ທີ່ມີຜົນງານ**

ຜູ້ທີ່ມີຜົນງານດີເດັ່ນ ໃນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຈະໄດ້ຮັບການຍ້ອງຍໍ ຕາມລະບຽບການ.

**ມາດຕາ 49 ມາດຕະການຕໍ່ຜູ້ລະເມີດ**

ຜູ້ຄວບຄຸມລະບົບຍ່ອຍ, ສະມາຊິກ ແລະ ພາກສ່ວນທີ່ກ່ຽວຂ້ອງກັບລະບົບການຊຳລະທຸລະກຳຍ່ອຍ ທີ່ລະເມີດຕໍ່ຂໍ້ຕົກລົງສະບັບນີ້ ຈະຖືກສຶກສາອົບຮົມ, ກ່າວເຕືອນ, ລົງວິໄນ, ປັບໃໝ, ໃຊ້ແທນຄ່າເສຍຫາຍທາງແພ່ງ ຫຼື ຖືກລົງໂທດທາງອາຍາ ຕາມກໍລະນີເບົາ ຫຼື ໜັກ.

## ພາກທີ VII
## ບົດບັນຍັດສຸດທ້າຍ

**ມາດຕາ 50 ການຈັດຕັ້ງປະຕິບັດ**

ກົມຄຸ້ມຄອງລະບົບຊຳລະສະສາງ, ຜູ້ຄວບຄຸມລະບົບຍ່ອຍ, ສະມາຊິກ ແລະ ພາກສ່ວນທີ່ກ່ຽວຂ້ອງກັບລະບົບການຊຳລະທຸລະກຳຍ່ອຍ ເປັນເຈົ້າການປະຕິບັດຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 51 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ຜູ້ວ່າການທະນາຄານແຫ່ງ ສປປ ລາວ

ສອນໄຊ ສິດພະໄຊ